ປະກາດຄະນະກຳມະການກິດຈະການກະຈາຍສຽງ ກິດຈະການໂທລະທັດ
ແລະກິດຈະການໂທລະຄົມມະນາຄົມແຫ່ງຊາດ
ເລື່ອງ ຫລັກເກນແລະວິທີການຈັດສັນຄື່ນຄວາມຖີ່ເພື່ອກິດຈະການວິທະຍຸຄົມມະນາຄົມ
------------------------

ໂດຍທີ່ເປັນການສົມຄວນໃຫ້ມີຫລັກເກນແລະວິທີການຈັດສັນຄື່ນຄວາມຖີ່ເພື່ອກິດຈະການວິທະຍຸຄົມມະນາຄົມ ເພື່ອໃຫ້ທຸກພາກສ່ວນໄດ້ເຂົ້າໃຈຕົງກັນຖືງຫລັກເກນແລະວິທີການທີ່ຄະນະກຳມະການກິດຈະການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມແຫ່ງຊາດ ໃຊ້ໃນການພິຈາລະນາຈັດສັນຄື່ນຄວາມຖີ່ເພື່ອກິດຈະການວິທະຍຸຄົມມະນາຄົມ ອັນເປັນກິດຈະການທີ່ຊ່ອຍສະຫນັບສະຫນຸນຄວາມຈະເລີນກ້າວຫນ້າ ແລະຄວາມຫມັ້ນຄົງຂອງປະເທດຊາດ

ອາໄສອຳນາດຕາມຄວາມໃນມາດຕາ27 (4) (24)ມາດຕາ81ແລະເມດຕາ87ແຫ່ງພະຣາດຊະບັນຍັດອົງກອນຈັດສັນຄື່ນຄວາມຖີ່ແລະກຳກັບການປະກອບກິດຈະການວິທະຍຸກະຈາຍສຽງ ວິທະຍຸໂທລະທັດແລະກິດຈະການໂທລະຄົມມະນາຄົມ ປີ 2010
ປະກອບກັບມາດຕາ11ແລະມາດຕາ11 ທະວິ ແຫ່ງພະຣາດຊະບັນຍັດວິທະຍຸຄົມມະນາຄົມປີ1955 ຊຶ່ງແກ້ໄຂເພີ່ມເຕີມໂດຍພະຣາດຊະບັນຍັດວິທະຍຸຄົມມະນາຄົມ (ສະບັບທີ 3) ປີ1992ຄະນະກຳມະການກິດຈະການກະຈາຍສຽງ ກິດຈະການໂທລະທັດ ແລະກິດຈະການໂທລະຄົມມະນາຄົມແຫ່ງຊາດຈື່ງກຳຫນົດຫລັກເກນແລະວິທີການຈັດສັນຄື່ນຄວາມຖີ່ເພື່ອກິດຈະການວິທະຍຸຄົມມະນາຄົມໄວ້ດັ່ງຕໍ່ໄປນີ້

ຂໍ້ 1 ບັນດາປະກາດຄະນະກຳມະການກິດຈະການກະຈາຍສຽງ ກິດຈະການໂທລະທັດ ແລະກິດຈະການໂທລະຄົມມະນາຄົມແຫ່ງຊາດທີ່ກ່ຽວຂ້ອງກັບຫລັກເກນການອານຸຍາດແລະກຳກັບເບິ່ງແຍງກິດຈະການວິທະຍຸສະຫມັກຫລິ້ນ ຫລັກເກນແລະວິທີການອານຸຍາດໃຫ້ໃຊ້ຄື່ນຄວາມຖີ່ໃນກິດຈະການປະຈຳທີ່ຍ່ານຄວາມຖີ່71-76ກິກກະເຮີດ(GHz) ແລະ 81-86 ກິກກະເຮີດ(GHz)ຫລັກເກນການອານຸຍາດໃຫ້ໃຊ້ຄື່ນຄວາມຖີ່ເພື່ອການທົດລອງຫລືການທົດສອບເປັນການຊົ່ວຄາວໃນກິດຈະການວິທະຍຸຄົມມະນາຄົມແລະກິດຈະການໂທລະຄົມມະນາຄົມ ແລະເຄື່ອງວິທະຍຸຄົມມະນາຄົມແລະສະຖານນີວິທະຍຸຄົມມະນາຄົມທີ່ໄດ້ຮັບຍົກເວັ້ນບໍ່ຕ້ອງໄດ້ຮັບໃບອານຸຍາດ ຊຶ່ງໄດ້ປະກາດໃຊ້ບັງຄັບຢູ່ກ່ອນວັນທີ່ປະກາດນີ້ ມີຜົນໃຊ້ບັງຄັບ ໃຫ້ມີຜົນໃຊ້ບັງຄັບຕໍ່ໄປເທົ່າທີ່ບໍ່ຂັດຫລືແຍ້ງຕໍ່ຫລັກເກນທີ່ກຳຫນົດໃນປະກາດນີ້

ຂໍ້ 2 ໃນປະກາດນີ້

"ກິດຈະການວິທະຍຸຄົມມະນາຄົມ"ຫມາຍຄວາມວ່າ ກິດຈະການຊຶ່ງເປັນການຮັບແລະສົ່ງເຄື່ອງຫມາຍ ສັນຍານ ຕົວຫນັງສື ຕົວເລກ ຮູບ ສຽງ ລະຫັດ ຫລືສິ່ງອື່ນໃດ ຊຶ່ງສາມາດໃຫ້ເຂົ້າໃຈຄວາມຫມາຍໄດ້ໂດຍລະບົບຄື່ນຄວາມຖີ່ເພື່ອຄວາມມຸ້ງຫມາຍທາງໂທລະຄົມມະນາຄົມໃນກິດຈະການໃດກິດຈະການຫນຶ່ງໂດຍສະເພາະຫລືເປັນການສະເພາະກິດທີ່ບໍ່ເປັນການປະກອບກິດຈະການໂທລະຄົມມະນາຄົມຕາມກົດຫມາຍວ່າດ້ວຍການປະກອບກິດຈະການໂທລະຄົມມະນາຄົມ ຫລືກິດຈະການກະຈາຍສຽງຫລືກິດຈະການໂທລະທັດຕາມກົດຫມາຍວ່າດ້ວຍການປະກອບກິດຈະການກະຈາຍສຽງແລະກິດຈະການໂທລະທັດ

"ຈັດສັນຄື່ນຄວາມຖີ່"ຫມາຍຄວາມວ່າ ການອານຸຍາດໃຫ້ສະຖານນີວິທະຍຸຄົມມະນາຄົມ ໃຊ້ຄວາມຖີ່ວິທະຍຸຫລືຊ່ອງຄວາມຖີ່ວິທະຍຸ ຕາມຕາຕະລາງກຳຫນົດຄື່ນຄວາມຖີ່ແຫ່ງຊາດຫລືແຜນຄວາມຖີ່ວິທະຍຸເພື່ອໃຊ້ງານພາຍໃຕ້ເງື່ອນໄຂທີ່ ກສທຊ. ກຳຫນົດ



"ຈັດສັນຄື່ນຄວາມຖີ່ໃຫມ່"ຫມາຍຄວາມວ່າ ການອານຸຍາດໃຫ້ສະຖານນີວິທະຍຸຄົມມະນາຄົມ ໃຊ້ຄວາມຖີ່ວິທະຍຸຫລືຊ່ອງຄວາມຖີ່ວິທະຍຸ ຕາມຕາຕະລາງກຳຫນົດຄື່ນຄວາມຖີ່ແຫ່ງຊາດຫລືແຜນຄວາມຖີ່ວິທະຍຸ ເພື່ອໃຊ້ງານພາຍໃຕ້ເງື່ອນໄຂທີ່ ກສທຊ.ກຳຫນົດ ຊຶ່ງຜູ້ຂໍຮັບຈັດສັນຄື່ນຄວາມຖີ່ ຍັງບໍ່ເຄີຍໄດ້ຮັບຈັດສັນຄື່ນຄວາມຖີ່ດັ່ງກ່າວມາກ່ອນ

"ຈັດສັນຄື່ນຄວາມຖີ່ທົດແທນຄື່ນຄວາມຖີ່ເດີມ"ຫມາຍຄວາມວ່າ ການອານຸຍາດໃຫ້ສະຖານນີວິທະຍຸຄົມມະນາຄົມ ໃຊ້ຄວາມຖີ່ວິທະຍຸຫລືຊ່ອງຄວາມຖີ່ວິທະຍຸ ຕາມຕາຕະລາງກໍາຫນົດຄື່ນຄວາມຖີ່ແຫ່ງຊາດຫລືແຜນຄວາມຖີ່ວິທະຍຸເພື່ອທົດແທນຄື່ນຄວາມຖີ່ເດີມ ໃນກໍລະນີທີ່ ກສທຊ.ມີຄໍາສັ່ງເອີ້ນຄືນຄື່ນຄວາມຖີ່ ຫລືເປັນການດໍາເນີນການຕາມປະກາດ ກສທຊ.ວ່າດ້ວຍການປັບປຸງການໃຊ້ຄື່ນຄວາມຖີ່ ຫລືເພື່ອແກ້ບັນຫາການໃຊ້ຄື່ນຄວາມຖີ່ທີ່ມີການລົບກວນຊຶ່ງກັນແລະກັນ ໂດຍໃຫ້ໃຊ້ງານພາຍໃຕ້ເງື່ອນໄຂທີ່ ກສທຊ.ກໍາຫນົດ

"ຈັດສັນຄື່ນຄວາມຖີ່ແບບໃຊ້ຮ່ວມ"ຫມາຍຄວາມວ່າ ການອານຸຍາດໃຫ້ສະຖານນີວິທະຍຸຄົມມະນາຄົມ ໃຊ້ຄວາມຖີ່ວິທະຍຸຫລືຊ່ອງຄວາມຖີ່ວິທະຍຸ ຕາມຕາຕະລາງກໍາຫນົດຄື່ນຄວາມຖີ່ແຫ່ງຊາດຫລືແຜນຄວາມຖີ່ວິທະຍຸ ເພື່ອໃຊ້ງານພາຍໃຕ້ເງື່ອນໄຂທີ່ ກສທຊ.ກໍາຫນົດ ຮ່ວມກັບຜູ້ໄດ້ຮັບຈັດສັນຄື່ນຄວາມຖີ່ລາຍອື່ນ ໂດຍເປັນການໃຊ້ງານໃນລັກສະນະໃຊ້ໂຄງຂ່າຍດຽວກັນ ຫລືໃນລັກສະນະທີ່ພື້ນທີ່ໃຊ້ງານທັບຊ້ອນກັນ

"ຈັດສັນຄື່ນຄວາມຖີ່ເປັນການຊົ່ວຄາວ"ຫມາຍຄວາມວ່າ ການຈັດສັນຄື່ນຄວາມຖີ່ທີ່ໄລຍະເວລາອານຸຍາດບໍ່ເກີນ 180ວັນ ໂດຍມີວັດຖຸປະສົງຢ່າງໃດຢ່າງຫນຶ່ງ ດັ່ງຕໍ່ໄປນີ້

(1) ເພື່ອໃຊ້ສໍາລັບການສະແດງເປັນຕົວຢ່າງເພື່ອປະກອບການປະກວດລາຄາ ຫລືການສະແດງເປັນຕົວຢ່າງໃນງານສະແດງ

(2) ເພື່ອສຶກສາວິໄຈ ທົດລອງຫລືທົດສອບ

(3)ເພື່ອອາລັກຂາບຸກຄົນສໍາຄັນໃນຂະນະມາເຍືອນປະເທດໄທ

(4)ເພື່ອຝຶກຊ້ອມລົບທາງທະຫານຮ່ວມກັບປະເທດອື່ນ

(5)ເພື່ອສະຫນັບສະຫນູນກິດຈະກໍາພິເສດ

(6)ເພື່ອວັດຖຸປະສົງອື່ນຕາມທີ່ ກສທຊ.ກໍາຫນົດ

"ການອານຸຍາດໃຊ້ຄື່ນຄວາມຖີ່ທີ່ກໍາຫນົດໃຫ້ໃຊ້ຮ່ວມກັນເປັນການສະເພາະ"ຫມາຍຄວາມວ່າ ການຂໍອານຸຍາດໃຫ້ສະຖານນີວິທະຍຸຄົມມະນາຄົມ ໃຊ້ຄວາມຖີ່ວິທະຍຸຫລືຊ່ອງຄວາມຖີ່ວິທະຍຸ ຕາມປະກາດ ກສທຊ. ທີ່ກ່ຽວຂ້ອງ ຮ່ວມກັບຜູ້ໄດ້ຮັບຈັດສັນຄື່ນຄວາມຖີ່ລາຍອື່ນ ໃນກິດຈະການທີ່ກໍາຫນົດເປັນການສະເພາະ ເຊັ່ນ: ກິດຈະການເພື່ອສື່ມວນຊົນ ກິດຈະການເພື່ອສາທາລະນະສຸກ ຄື່ນຄວາມຖີ່ສໍາລັບອົງກອນປົກຄອງສ່ວນທ້ອງຖິ່ນ ຄື່ນຄວາມຖີ່ກາງສໍາລັບການຕິດຕໍ່ປະສານງານລະຫວ່າງຫນ່ວຍງານຂອງລັດແລະປະຊາຊົນ ເປັນຕົ້ນ

"ການປ່ຽນແປງຂອບເຂດການອານຸຍາດຂອງຄື່ນຄວາມຖີ່ທີ່ຈັດສັນໄວ້ເດີມ"ຫມາຍຄວາມວ່າການປັບປ່ຽນພື້ນທີ່ການໃຊ້ງານ ຫລືປັບປ່ຽນຈໍານວນສະຖານນີວິທະຍຸຄົມມະນາຄົມ ຫລືປັບລົດໄລຍະຫ່າງຂອງຊ່ອງຄວາມຖີ່ວິທະຍຸທີ່ຢູ່ຕິດກັນ (channel spacing) ຫລືປັບລົດຄວາມກ້າງແຖບຄື່ນຄວາມຖີ່ (Bandwidth) ຫລືປັບລົດກໍາລັງສົ່ງຂອງເຄື່ອງວິທະຍຸຄົມມະນາຄົມ ຫລືປັບລົດຄວາມສູງຂອງສາຍອາກາດ ໂດຍໃຊ້ຄວາມຖີ່ວິທະຍຸຫລືຊ່ອງຄວາມຖີ່ວິທະຍຸທີ່ໄດ້ຮັບຈັດສັນໄວ້ເດີມ ແລະການໃຊ້ງານຕາມວັດຖຸປະສົງເດີມ



---

## ຫມວດ 1
## ການຂໍຮັບຈັດສັນຄື່ນຄວາມຖີ່

--------------------------------

ຂໍ້ 3 ການຂໍຮັບຈັດສັນຄື່ນຄວາມຖີ່ຕ້ອງເປັນໄປເພື່ອວັດຖຸປະສົງຢ່າງໃດຢ່າງຫນຶ່ງ ດັ່ງຕໍ່ໄປນີ້

3.1ເພື່ອຄວາມຫມັ້ນຄົງຂອງລັດ ຕາມປະກາດຄະນະກໍາມະການກິດຈະການກະຈາຍສຽງ ກິດຈະການໂທລະທັດ ແລະກິດຈະການໂທລະຄົມມະນາຄົມແຫ່ງຊາດ ວ່າດ້ວຍແນວທາງການຈັດສັນຄື່ນຄວາມຖີ່ສໍາລັບກິດຈະການວິທະຍຸຄົມມະນາຄົມເພື່ອຄວາມຫມັ້ນຄົງຂອງລັດ

3.2ເພື່ອການສຶກສາ ຫລືວັດທະນະທໍາ ຫລືປະໂຫຍດສາທາລະນະ

3.3ເພື່ອສະຫນັບສະຫນູນການປະກອບກິດຈະການກະຈາຍສຽງ ຫລືກິດຈະການໂທລະທັດຫລືກິດຈະການໂທລະຄົມມະນາຄົມ

3.4ເພື່ອບໍລິຫານຈັດການພາຍໃນຫນ່ວຍງານຫລືສະຫນັບສະຫນູນພາລະກິດຂອງຫນ່ວຍງານ

3.5ເພື່ອໃຊ້ສໍາລັບການສະແດງເປັນຕົວຢ່າງເພື່ອປະກອບການປະກວດລາຄາ ຫລືການສະແດງເປັນຕົວຢ່າງໃນງານສະແດງ

3.6ເພື່ອສຶກສາວິໄຈ ທົດລອງຫລືທົດສອບ

3.7ເພື່ອອາລັກຂາບຸກຄົນສຳຄັນໃນຂະນະມາຢ້ຽມຢາມປະເທດໄທ

3.8ເພື່ອຝຶກຊ້ອມຮົບທາງທະຫານຮ່ວມກັບປະເທດອື່ນ

3.9ເພື່ອສະຫນັບສະຫນູນກິດຈະກຳພິເສດ

3.10ເພື່ອວັດຖຸປະສົງອື່ນ ຕາມທີ່ ກສທຊ.ກຳຫນົດ

ຂໍ້ 4 ປະເພດຂອງການຂໍຮັບຈັດສັນຄື່ນຄວາມຖີ່ ມີດັ່ງນີ້

4.1 ການຂໍຮັບຈັດສັນຄື່ນຄວາມຖີ່ໃຫມ່

4.2 ການຂໍຮັບຈັດສັນຄື່ນຄວາມຖີ່ທົດແທນຄື່ນຄວາມຖີ່ເດີມ

4.3 ການຂໍຮັບຈັດສັນຄື່ນຄວາມຖີ່ແບບໃຊ້ຮ່ວມ

4.4 ການຂໍຮັບຈັດສັນຄື່ນຄວາມຖີ່ເປັນການຊົ່ວຄາວ

4.5 ການຂໍອານຸຍາດໃຊ້ຄື່ນຄວາມຖີ່ທີ່ກຳຫນົດໃຫ້ໃຊ້ຮ່ວມກັນເປັນການສະເພາະ

4.6 ການຂໍອານຸຍາດປ່ຽນແງຂອບເຂດການອານຸຍາດຂອງຄື່ນຄວາມຖີ່ທີ່ຈັດສັນໄວ້ເດີມ

ຂໍ້ 5 ຜູ້ຂໍຮັບຈັດສັນຄື່ນຄວາມຖີ່ຕ້ອງມີຄຸນສົມບັດຢ່າງໃດຢ່າງຫນຶ່ງ ດັ່ງຕໍ່ໄປນີ້

5.1 ເປັນສ່ວນຣາດຊະການ ລັດວິສາຫະກິດ ຫລືຫນວຍງານຂອງລັດ

5.2 ເປັນນິຕິບຸກຄົນຊຶ່ງຈັດຕັ້ງຂຶ້ນຕາມກົດຫມາຍໄທ

5.3 ເປັນບຸກຄົນທຳມະດາ

5.4ເປັນທົບວົງຊຳນັນພິເສດພາຍໃຕ້ອົງການສະຫະປະຊາຊາດ ສຳນັກງານຄະນະກຳມະການກາຊາດລະຫວ່າງປະເທດ ສະຖານເອກອັດຄະລາດຊະທູດ ສະຖານເອກອັດຄະລາດຊະທູດ ສະຖານທູດ ສະຖານກົງສຸນໃຫຍ່ ແລະສະຖານກົງສຸນ



5.5 ເປັນອົງກອນລະຫວ່າງປະເທດທີ່ມີສຳນັກງານໃນປະເທດໄທ ຊຶ່ງລັດຖະບານໄທໄດ້ອອກພະຣາດຊະບັນຍັດຄຸ້ມຄອງການດຳເນີນງານຂອງອົງກອນນັ້ນ

ຂໍ້ 6 ການລົງທະບຽນເພື່ອຂໍຮັບລະຫັດປະຈຳຕົວສຳລັບຜູ້ຂໍຮັບຈັດສັນຄື່ນຄວາມຖີ່ແລະການປ່ຽນແປງຂໍ້ມູນທີ່ໄດ້ລົງທະບຽນໄວ້ແລ້ວ

ຜູ້ຂໍຮັບຈັດສັນຄື່ນຄວາມຖີ່ທີ່ຍັງບໍ່ມີລະຫັດປະຈຳຕົວສຳລັບຜູ້ຂໍຮັບຈັດສັນຄື່ນຄວາມຖີ່ຫລືຕ້ອງການປ່ຽນແປງຂໍ້ມູນທີ່ໄດ້ລົງທະບຽນໄວ້ແລ້ວ ຕ້ອງຍື່ນຄຳຂໍຕາມທີ່ສຳນັກງານ ກສທຊ. ກຳຫນົດ ພ້ອມເອກະສານຫລັກຖານ ດັ່ງຕໍ່ໄປນີ້

6.1 ກໍລະນີສ່ວນຣາດຊະການ ລັດວິສາຫະກິດ ຫລືຫນ່ວຍງານຂອງລັດໄດ້ແກ່

6.1.1 ຫນັງສືນຳຈາກສ່ວນຣາດຊະການ ລັດວິສາຫະກິດ ຫລືຫນ່ວຍງານຂອງລັດທົ່ວປະເທດ ຊຶ່ງລົງນາມໂດຍຫົວຫນ້າສ່ວນຣາດຊະການລະດັບກາງ ທະບວງ ກົມ ຜູ້ບໍລິການສູງສຸດຂອງລັດວິສາຫະກິດ ຫລືຜູ້ບໍລິການສູງສຸດຂອງຫນ່ວຍງານຂອງລັດ ແລ້ວແຕ່ກໍລະນີ

6.1.2 ຫນັງສືນຳຈາກຫນ່ວຍງານຣາດຊະການສັງກັດກະຊວງກະລາໂຫມ ຊຶ່ງລົງນາມໂດຍປະຫລັດກະຊວງກະລາໂຫມ ປີ້ມຣາດຊະອົງຄະລັກ ຜູ້ບັນຊາການຫນ່ວຍງານບັນຊາການຖະຫວາຍຄວາມປອດໄພຮັກສາພະອົງ ເຈົ້າກົມການສື່ສານທະຫານ ກອງບັນຊາການກອງທັບໄທ ເຈົ້າກົມການທະຫານສື່ສານ ກອງທັບບົກ ເຈົ້າກົມການສື່ສານແລະເຕັກໂນໂລຊີສານສົນເທດທະຫານເຮືອ ກອງທັບເຮືອ ເຈົ້າກົມສື່ສານອິເລັກໂທນິກທະຫານອາກາດ ກອງທັບອາກາດ ແລ້ວແຕ່ກໍລະນີ

6.1.3 ຫນັງສືນຳຈາກຫນ່ວຍງານຣາດຊະການຕຳຫລວດ ຊຶ່ງລົງນາມໂດຍຜູ້ບັງຄັບບັນຊາກອງຕຳຫລວດສື່ສານ ສຳນັກງານຕຳຫລວດແຫ່ງຊາດ

6.2 ກໍລະນີນິຕິບຸກຄົນຊຶ່ງຈັດຕັ້ງຂຶ້ນຕາມກົດຫມາຍໄດ້ແກ່

6.2.1 ເອກະສານຫລັກຖານຊຶ່ງສະແດງຖືງສະຖານະຕາມກົດຫມາຍ ໄດ້ແກ່ ສຳເນົາສັນຍາຈັດຕັ້ງຄະນະບຸກຄົນ ຫລື ສຳເນົາທະບຽນພານິດ ຫລືສຳເນົາຫນັງສືຮັບຮອງການຈົດທະບຽນຫ້າງຫຸ້ນສ່ວນຈຳກັດ ຫລື ສຳເນົາຫນັງສືຮັບຮອງການຈົດທະບຽນນິຕິບຸກຄົ ຫລືສຳເນົາໃບສຳຄັນສະແດງການຈົດທະບຽນສະມາຄົມຫລືມູນລະນິທິແລະສຳເນົາໃບສຳຄັນສະແດງລາຍຊືຄະນະກຳມະການສະມາຄົມຫລືມູນລະນິທິ ແລ້ວແຕ່ກໍລະນີ

6.2.2 ສຳເນົາບັດປະຈຳຕົວປະຊາຊົນແລະສຳເນົາທະບຽນບ້ານຂອງຜູ້ມີອຳນາດລົງນາມ ຫລືຜູ້ມີອຳນາດກະທຳການ ຫລືຜູ້ຮັບມອບອຳນາດ ແລ້ວແຕ່ກໍລະນີ

6.2.3 ຫນັງສືມອບອຳນາດຕາມກົດຫມາຍ ພ້ອມສຳເນົາບັດປະຈຳຕົວປະຊາຊົນແລະສຳເນົາທະບຽນບ້ານຂອງຜູ້ມອບອຳນາດແລະຜູ້ຮັບມອບອຳນາດ ໃນກໍລະນີທີ່ມີການມອບອຳນາດໃຫ້ກະທຳການແທນ

6.3 ກໍລະນີບຸກຄົນທຳມະດາ ໄດ້ແກ່

6.3.1 ສຳເນົາບັດປະຈຳຕົວປະຊາຊົນ ຫລືສຳເນົາບັດອື່ນທີ່ກົດຫມາຍບັນຍັດໃຫ້ໃຊ້ແທນບັດປະຈຳຕົວປະຊາຊົນໄດ້ ແລະສຳເນົາທະບຽນບ້ານຂອງຜູ້ຂໍຮັບອານຸຍາດ



6.3.2ຫນັງສືມອບອຳນາດຕາມກົດຫມາຍ ພ້ອມສຳເນົາບັດປະຈຳຕົວປະຊາຊົນແລະສຳເນົາທະບຽນບ້ານຂອງຜູ້ມອບອຳນາດແລະຜູ້ຮັບມອບອຳນາດ ໃນກໍລະນີທີ່ມີການມອບອຳນາດໃຫ້ກະທຳການແທນ

6.4ກໍລະນີທະບວງຊຳນັນພິເສດພາຍໃຕ້ອົງການສະຫະປະຊາຊາດ ສຳນັກງານຄະນະກຳມະການກາຊາດລະຫວ່າງປະເທດ ສະຖານເອັກອັດຄະລາດຊະທູດ ສະຖານເອັກອັດຄະນັດສະມານະທູດ ສະຖານທູດ ສະຖານກົງສຸນໃຫຍ່ ແລະສະຖານກົງສຸນ ໄດ້ແກ່ ຫນັງສືນຳຈາກສຳນັກເລຂາທິການນາຍຍົກລັດຖະມົນຕີ ຫລືກົມພິທີທາງການທູດ ກະຊວງການຕ່າງປະເທດ ຊຶ່ງລົງນາມໂດຍຫົວຫນ້າຫນ່ວຍງານ ແລ້ວແຕ່ກໍລະນີ

6.5ກໍລະນີອົງກອນລະຫວ່າງປະເທດທີ່ມີສຳນັກງານໃນປະເທດໄທ ຊຶ່ງລັດຖະບານໄທໄດ້ອອກພະຣາດຊະບັນຍັດຄຸ້ມຄອງການດຳເນີນງານຂອງອົງກອນນັ້ນ ໄດ້ແກ່ ຫນັງສືນຳຈາກອົງກອນລະຫວ່າງປະເທດນັ້ນ ຊຶ່ງລົງນາມໂດຍຫົວຫນ້າຫນ່ວຍງານ ຫລືຜູ້ທີ່ໄດ້ຮັບມອບຫມາຍ ແລ້ວແຕ່ກໍລະນີ

ເມື່ອສຳນັກງານ ກສທຊ.ໄດ້ຮັບເອກະສານຄົບຖ້ວນ ໃຫ້ສຳນັກງານ ກສທຊ. ກຳຫນົດລະຫັດປະຈຳຕົວສຳລັບຜູ້ຂໍຮັບຈັດສັນຄື້ນຄວາມຖີ່ ຫລືປ່ຽນແປງຂໍ້ມູນທີ່ໄດ້ລົງທະບຽນໄວ້ແລ້ວ ແລ້ວແຕ່ກໍລະນີໃຫ້ແກ່ຜູ້ຂໍຮັບຈັດສັນຄື້ນຄວາມຖີ່

ຂໍ້ 7ການຍື່ນຄຳຂໍຮັບຈັດສັນຄື້ນຄວາມຖີ່

ຜູ້ປະສົງຈະຂໍຮັບຈັດສັນຄື້ນຄວາມຖີ່ທີ່ມີຄຸນສົມບັດຕາມຂໍ້ 5 ແລະໄດ້ດຳເນີນການຕາມຂໍ້ 6 ແລ້ວສາມາດຍື່ນຄຳຂໍໄດ້ ໂດຍມີລາຍລະອຽດດັ່ງຕໍ່ໄປນີ້

7.1 ແບບຄຳຂໍ

7.1.1 ຜູ້ຂໍຮັບຈັດສັນຄື້ນຄວາມຖີ່ຕ້ອງຍື່ນຄຳຂໍຕາມແບບທີ່ສຳນັກງານ ກສທຊ.ກຳຫນົດ ໂດຍຂຽນລາຍລະອຽດຂໍ້ມູນໃນແບບຄຳຂໍໃຫ້ຖືກຕ້ອງຄົບຖ້ວນ

7.1.2 ຄຳຂໍຕ້ອງລົງນາມໂດຍຜູ້ຂໍຮັບຈັດສັນຄື້ນຄວາມຖີ່ ຜູ້ມີອຳນາດກະທຳການຫລືຜູ້ຮັບມອບອຳນາດ ເວັ້ນແຕ່ກໍລະນີສ່ວນຣາດຊະການ ລັດວິສາຫະກິດ ຫນ່ວຍງານຂອງລັດ ທະບວງຊຳນັນພິເສດ ພາຍໃຕ້ອົງການສະຫະປະຊາຊາດ ສຳນັກງານຄະນະກຳມະການກາຊາດລະຫວ່າງປະເທດ ສະຖານເອັກອັດຄະລາດຊະທູດ ສະຖານເອັກອັດຄະນັດສະມານະທູດ ສະຖານທູດ ສະຖານກົງສຸນໃຫຍ່ ສະຖານກົງສຸນ ແລະອົງກອນລະຫວ່າງປະເທດທີ່ມີສຳນັກງານໃນປະເທດໄທ ຊຶ່ງລັດຖະບານໄທໄດ້ອອກພະຣາດຊະບັນຍັດຄຸ້ມຄອງການດຳເນີນງານຂອງອົງກອນນັ້ນໃຫ້ລົງນາມໂດຍບຸກຄົນດັ່ງຕໍ່ໄປນີ້

7.1.2.1 ສ່ວນຣາດຊະການ ລັດວິສາຫະກິດ ຫລືຫນ່ວຍງານຂອງລັດທົ່ວໄປໃຫ້ລົງນາມໂດຍຫົວຫນ້າສ່ວນຣາດຊະການລະດັບກາງ ທະບວງ ກົມ ຜູ້ບໍລິຫານສູງສຸດຂອງລັດວິສາຫະກິດ ຫລືຜູ້ບໍລິການສູງສຸດຂອງຫນ່ວຍງານຂອງລັດ ແລ້ວແຕ່ກໍລະນີ

7.1.2.2 ຫນ່ວຍງານຣາດຊະການທະຫານ ໃຫ້ລົງນາມໂດຍປະຫລັດກະຊວງກະລາໂຫມ ປື້ມຣາດຊະອົງຄະລັກ ຜູ້ບັນຊາການຫນ່ວຍບັນຊາການຖະຫວາຍຄວາມປອດໄພຣັກສາພະອົງ ເຈົ້າກົມການສື່ສານທະຫານກອງບັນຊາການກອງທັບໄທ ເຈົ້າກົມກຸນທະຫານສື່ສານ ກອງທັບບົກ ເຈົ້າກົມການສື່ສານແລະເຕັກໂນໂລຊີ ສານສົນເທດທະຫານເຮືອ ກອງທັບເຮືອ ເຈົ້າກົມສື່ສານອີເລັກໂທນິກທະຫານອາກາດ ກອງທັບອາກາດ ແລ້ວແຕ່ກໍລະນີ

7.1.2.3 ຫນ່ວຍງານຣາດຊະການຕຳຫລວດ ໃຫ້ລົງນາມໂດຍຜູ້ບັງຄັບການກອງຕຳຫລວດສື່ສານ ສຳນັກງານຕຳຫລວດແຫ່ງຊາດ

7.1.2.4 ທະບວງຊຳນັນພິເສດພາຍໃຕ້ອົງການສະຫະປະຊາຊາດ ສຳນັກງານຄະນະກຳມະການກາຊາດລະຫວ່າງປະເທດ ສະຖານເອັກອັດຄະລາດຊະທູດ ສະຖານເອັກອັດຄະນັດສະມານະທູດສະຖານທູດ ສະການກົງສຸນໃຫຍ່ ແລະສະຖານກົງສຸນ ໃຫ້ລົງນາມໂດຍເລຂາທິການນາຍຍົກລັດຖະມົນຕີ ຫລືອະທິບໍດີກົມພິທີທາງການທູດແລ້ວແຕ່ກໍລະນີ

7.1.2.5 ອົງກອນລະຫວ່າງປະເທດ ທີ່ມີສຳນັກງານໃນປະເທດໄທ ຊຶ່ງລັດຖະບານໄທໄດ້ອອກພະຣາດຊະບັນຍັດຄຸ້ມຄອງການດຳເນີນງານຂອງອົງກອນນັ້ນ ໃຫ້ລົງນາມໂດຍຫົວຫນ້າຫນ່ວຍງານ ຫລືຜູ້ທີ່ໄດ້ຮັບມອບຫມາຍ ແລ້ວແຕ່ກໍລະນີ

7.2 ເອກະສານຫລັກຖານທີ່ໃຊ້ປະກອບການຂໍຮັບຈັດສັນຄື່ນຄວາມຖີ່

ຜູ້ຂໍຮັບຈັດສັນຄື່ນຄວາມຖີ່ຕ້ອງຍື່ນເອກະສານຫລັກຖານທີ່ໃຊ້ປະກອບການຂໍຮັບຈັດສັນຄື່ນຄວາມຖີ່ ຕາມທີ່ກຳຫນົດໃນພາກຜະນວກ

7.3 ສະຖານທີ່ຍື່ນຄຳຂໍ

ໃຫ້ຜູ້ຂໍຮັບຈັດສັນຄື່ນຄວາມຖີ່ຍື່ນຄຳຂໍພ້ອມເອກະສານຫລັກຖານທີ່

7.3.1 ສຳນັກງານ ກສທຊ. ເລກທີ87 ຖະຫນົນພະຫົນໂຍທິນ ຊອຍ8 (ສາຍລົມ)

ແຂວງສາມເສນໃນ ເຂດພະຍາໄທ ກຸງເທບມະຫານະຄອນ 10400

7.3.2 ສຳນັກງານ ກສທຊ.ພາກ ແລະສຳນັກງານ ກສທຊ.ເຂດ

7.3.3 ຊ່ອງທາງອື່ນທີ່ສຳນັກງານ ກສທຊ.ກຳຫນົດ

ຂໍ້ 8 ວິທີການແລ້ວຂັ້ນຕອນການດຳເນີນການ ມີດັ່ງນີ້

8.1 ໃຫ້ສຳນັກງານ ກສທຊ ພິຈາລະນາກວດສອບຄຳຂໍ ແລະເອກະສານຫລັກຖານທີ່ຈຳເປັນຕ້ອງໃຊ້ໃນການອານຸຍາດວ່າຖືກຕ້ອງແລະຄົບຖ້ວນຕາມຂໍ້7ຫລືບໍ່ ກ່ອນສະເຫນີເລື່ອງເພື່ອພິຈາລະນາອານຸມັດຈັດສັນຄື່ນຄວາມຖີ່

ຫາກປາກົດວ່າເອກະສານຫລັກຖານທີ່ຈຳເປັນຕ້ອງໃຊ້ປະກອບການພິຈາລະນາຕາມຂໍ້7ບໍ່ຖືກຕ້ອງ ບໍ່ຄົບຖ້ວນຫລືບໍ່ພຽງພໍ ໃຫ້ສຳນັກງານ ກສທຊ.ແຈ້ງເປັນຫນັງສືໄປຍັງຜູ້ຂໍຮັບຈັດສັນຄື່ນຄວາມຖີ່ພາຍໃນເວລາເຈັດມື້ ນັບແຕ່ມື້ທີ່ໄດ້ຮັບຄຳຂໍເພື່ອໃຫ້ຈັດສົ່ງເອກະສານຫລັກຖານທີ່ຈຳເປັນເພີ່ມເຕີມພາຍໃນໄລຍະເວລາເຈັດມື້ນັບແຕ່ມື້ທີ່ໄດ້ຮັບຫນັງສືແຈ້ງ ຫາກຜູ້ຂໍຮັບຈັດສັນຄື່ນຄວາມຖີ່ບໍ່ສົ່ງເອກະສານຫລັກຖານເພີ່ມເຕີມທີ່ສຳນັກງານ ກສທຊ.ແຈ້ງ ໃຫ້ສຳນັການ ກສທຊ.ຄືນຄຳຂຊໃຫ້ແກ່ຜູ້ຂໍຮັບຈັດສັນຄື່ນຄວາມຖີ່ ໂດຍແຈ້ງເປັນຫນັງສືພ້ອມລະບຸເຫດແຫ່ງການຄືນໃຫ້ຜູ້ຂໍຮັບຈັດສັນຄື່ນຄວາມຖີ່ຮູ້ດ້ວຍ ທັງນີ້ ບໍ່ຕັດສິດຂອງຜູ້ຂໍຮັບຈັດສັນຄື່ນຄວາມຖີ່ໃນການທີ່ຈະຍື່ນຄຳຂໍໃຫມ່

8.2 ກໍລະນີທີ່ຄຳຂໍພ້ອມເອກະສານຫລັກຖານຖືກຕ້ອງຄົບຖ້ວນ ສຳນັກງານ ກສທຊ.ຈະແຈ້ງໃຫ້ຜູ້ຂໍຮັບຈັດສັນຄື່ນຄວາມຖີ່ຊຳລະຄ່າທຳນຽມໃນການພິຈາລະນາຄຳຂໍຕາມທີ່ກຳຫນົດ



8.3 ໃຫ້ສຳນັກງານ ກສທຊ.ແຈ້ງຜົນການພິຈາລະນາຈັດສັນຄື່ນຄວາມຖີ່ໃຫ້ຜູ້ຂໍຮັບຈັດສັນຄື່ນຄວາມຖີ່ຮູ້ພາຍໃນເຈັດມື້ ນັບແຕ່ມື້ທີ່ການພິຈາລະນາສຳເລັດ

8.4 ກໍລະນີທີ່ຄຳຂໍໄດ້ຮັບການພິຈາລະນາອານຸມັດ ສຳນັກງານ ກສທຊ. ຈະແຈ້ງໃຫ້ຜູ້ຂໍຮັບຈັດສັນຄື່ນຄວາມຖີ່ຊຳລະຄ່າທຳນຽມທີ່ກ່ຽວຂ້ອງ ແລະເມື່ອສຳນັກງານ ກສທຊ.ໄດ້ຮັບຄ່າທຳນຽມຄົບຖ້ວນ ສຳນັກງານ ກສທຊ. ຈະກຳຫນົດມື້ເລີ່ມຕົ້ນການຈັດສັນຄື່ນຄວາມຖີ່ ອາຍຸການຈັດສັນຄື່ນຄວາມຖີ່ ແລະອອກຫລັກຖານການຈັດສັນຄື່ນຄວາມຖີ່ ພ້ອມໃບອານຸຍາດວິທະຍຸຄົມມະນາຄົມ(ຖ້າມີ)ໃຫ້ແກ່ຜູ້ຂໍຮັບຈັດສັນຄື່ນຄວາມຖີ່

8.5 ກໍລະນທີ່ຜູ້ຂໍຮັບຈັດສັນຄື່ນຄວາມຖີ່ ຢູ່ລະຫວ່າງກຽມການຈັດຫາເຄື່ອງວິທະຍຸຄົມມະນາຄົມຫລືທີ່ຕັ້ງສະຖານນີວິທະຍຸຄົມມະນາຄົມ ໃຫ້ດຳເນີນການເພີ່ມຈາກຂໍ້ 8.1 ຖືງຂໍ້ 8.4 ດັ່ງນີ້

8.5.1 ຜູ້ຂໍຮັບຈັດສັນຄື່ນຄວາມຖີ່ລະບຸວັນເລີ່ມຕົ້ນການຈັດສັນຄື່ນຄວາມຖີ່ແລະລາຍລະອຽດເບື້ອງຕົ້ນຂອງເຄື່ອງວິທະຍຸຄົມມະນາຄົມ ຫລືທີ່ຕັ້ງສະຖານນີວິທະຍຸຄົມມະນາຄົມ ລົງໃນຄຳຂໍ ໂດຍວັນເລີ່ມຕົ້ນການຈັດສັນຄື່ນຄວາມຖີ່ ຈະຕ້ອງບໍ່ເກີນຫນຶ່ງປີ ນັບຈາກວັນຍື່ນຄຳຂໍ

8.5.2 ເມື່ອຄຳຂໍໄດ້ຮັບການພິຈາລະນາອານຸມັດ ສຳນັກງານ ກສທຊ.ຈະອອກຫລັກຖານສະແດງສິດທີ່ຈະໃຊ້ຄື່ນຄວາມຖີ່ເບື້ອງຕົ້ນ ໃຫ້ແກ່ຜູ້ຂໍຮັບຈັດສັນຄື່ນຄວາມຖີ່

8.5.3 ສຳລັບຫນ່ວຍງານທີ່ໄດ້ຮັບຍົກເວັ້ນໃບອານຸຍາດວິທະຍຸຄົມມະນາຄົມ ຕາມມາດຕາ 5 ຂອງພະຣາດຊະບັນຍັດວິທະຍຸຄົມມະນາຄົມ ປີ 1955 ແລະທີ່ແກ້ໄຂເພີ່ມເຕີມ ໃຫ້ແຈ້ງລາຍລະອຽດກ່ຽວກັບການມີໃຊ້ເຄື່ອງວິທະຍຸຄົມມະນາຄົມ ແລ້ວຕັ້ງສະຖານນີວິທະຍຸຄົມມະນາຄົມ ຕາມທີ່ສຳນັກງານ ກສທຊ.ກຳຫນົດກ່ອນວັນເລີ່ມຕົ້ນ ການຈັດສັນຄື່ນຄວາມຖີ່ທີ່ລະບຸໄວ້ຕາມຂໍ້ 8.5.1ບໍ່ຫນ້ອຍກວ່າຫ້າມື້

8.5.4 ສຳລັບຫນ່ວຍງານອື່ນທີ່ບໍ່ໄດ້ຮັບຍົກເວັ້ນໃບອານຸຍາດວິທະຍຸຄົມມະນາຄົມຕາມມາດຕາ5ຂອງພະຣາດຊະບັນຍັດວິທະຍຸຄົມມະນາຄົມ ປີ 1955ແລະທີ່ແກ້ໄຂເພີ່ມເຕີມ ໃຫ້ຍື່ນຄຳຂໍຕາມປະກາດຄະນະກຳມະການກິດຈະການກະຈາຍສຽງ ກິດຈະການໂທລະທັດ ແລະກິດຈະການໂທລະຄົມມະນາຄົມແຫ່ງຊາດ ເລື່ອງ ການມີ ໃຊ້ເຄື່ອງວິທະຍຸຄົມມະນາຄົມ ແລະຕັ້ງສະຖານນີວິທະຍຸຄົມມະນາຄົມ ໃນສ່ວນທີ່ກ່ຽວຂ້ອງ ກ່ອນວັນເລີ່ມຕົ້ນ ການຈັດສັນຄື່ນຄວາມຖີ່ທີ່ລະບຸໄວ້ຕາມຂໍ້ 8.5.1ບໍ່ຫນ້ອຍກວ່າຫ້າມື້

8.5.5 ຫາກຜູ້ຂໍຮັບຈັດສັນຄື່ນຄວາມຖີ່ບໍ່ດຳເນີນການຕາມຂໍ້ 8.5.3ຫລື 8.5.4ແລ້ວແຕ່ກໍລະນີ ໃຫ້ຖືວ່າ ສິດທີ່ຈະໃຊ້ຄື່ນຄວາມຖີ່ເປັນອັນສິ້ນຜົນ

ຫມວດ2

ຫລັກເກນແລະວິທີການໃນການພິຈາລະນາຈັດສັນຄື່ນຄວາມຖີ່

--------------------------------

ຂໍ້ 9 ການຈັດສັນຄື່ນຄວາມຖີ່ເພື່ອກິດຈະການວິທະຍຸຄົມມະນາຄົມທຸກປະເພດ ບໍ່ລວມກໍລະນີການຈັດສັນຄື່ນຄວາມຖີ່ເປັນການຊົ່ວຄາວ ເພື່ອສຶກສາວິໄຈ ທົດລອງຫລືທົດສອບ ໃຊ້ຫລັກການມາກ່ອນໄດ້ຮັບການພິຈາລະນາກ່ອນ ໂດຍມີຫລັກເກນແລະວິທີການໃນການພິຈາລະນາ ດັ່ງນີ້

9.1 ຫລັກເກນໃນການພິຈາລະນາຈັດສັນຄື່ນຄວາມຖີ່ ປະກອບດ້ວຍ



9.1.1 ເຫດຜົນຄວາມຈຳເປັນຂອງການຂໍຮັບຈັດສັນຄື່ນຄວາມຖີ່ ເຊັ່ນ:ບໍ່ສາມາດເຊົ່າໃຊ້ບໍລິການເຄື່ອງວິທະຍຸຄົມມະນາຄົມໄດ້ ບໍ່ມີການໃຫ້ບໍລິການໂທລະຄົມມະນາຄົມທາງເລືອກອື່ນໃນພື້ນທີ່ທີ່ປະສົງຈະໃຊ້ງານ ມີບັນຫາການລົບກວນຄື່ນຄວາມຖີ່ໂດຍຜູ້ໄດ້ຮັບການລົບກວນຫລືເປັນຜູ້ກໍ່ໃຫ້ເກີດການລົບກວນຄື່ນຄວາມຖີ່ທີ່ໄດດ້ຮັບການຈັດສັນໄວ້ເດີມບໍ່ພຽງພໍເປັນຕົ້ນ

9.1.2 ຄວາມສອດຄ່ອງກັບແຜນແມ່ບົດການບໍລິຫານຄື່ນຄວາມຖີ່ ຕາຕະລາງກຳຫນົດຄື່ນຄວາມຖີ່ແຫ່ງຊາດ ແຜນແມ່ບົດກິດຈະການກະຈາຍສຽງແລະກິດຈະການໂທລະທັດ ແຜນແມ່ບົດກິດຈະການໂທລະຄົມມະນາຄົມແຜນຄວາມຖີ່ວິທະຍຸ ຫລືປະກາດ ກສທຊ.ທີ່ກ່ຽວຂ້ອງ

9.1.3 ຄວາມສອດຄ່ອງກັບວັດຖຸປະສົງແລະພາລະກິດຂອງຫນ່ວຍງານ

9.1.4 ຄວາມສອດຄ່ອງຂອງເຄື່ອງໂທລະຄົມມະນາຄົມແລະອຸປະກອນທີ່ຈະໃຊ້ງານກັບປະກາດວ່າດ້ວຍມາດຕະຖານທາງເຕັກນິກແລະການກວດສອບແລະຮັບຮອງມາດຕະຖານທີ່ກ່ຽວຂ້ອງ

9.1.5 ຄວາມສອດຄ່ອງກັບຂໍ້ຕົກລົງການປະສານແລະຈັດສັນຄື່ນຄວາມຖີ່ຕາມບໍລິເວນຊາຍແດນ

9.1.6 ຄວາມີປະສິດທິພາບແລະຄວາມຄຸ້ມຄ່າໃນການໃຊ້ປະໂຫຍດຄື່ນຄວາມຖີ່

9.1.6.1ການໃຊ້ຄື້ນຄວາມຖີ່ ຕ້ອງບໍ່ກໍ່ໃຫ້ເກີດການລົບກວນໃນລະດັບຮຸນແຮງຕໍ່ການໃຊ້ຄື້ນຄວາມຖີ່ພາຍໃນປະເທດແລະລະຫວ່າງປະເທດ

9.1.6.2 ການໃຊ້ຄື້ນຄວາມຖີ່ຕ້ອງບໍ່ກໍ່ໃຫ້ເກີດຜົນກະທົບຕໍ່ສະຖານນີກວດສອບການໃຊ້ຄື້ນຄວາມຖີ່ຂອງ ກສທຊ.

9.1.6.3 ການໃຊ້ຄື້ນຄວາມຖີ່  ຕ້ອງບໍ່ຊໍ້າຊ້ອນກັບການໃຫ້ບໍລິການໂທລະຄົມມະນາຄົມທີ່ມີລັກສະນະການໃຊ້ຄື້ນຄວາມຖີ່ຄ້າຍຄືກັນ ແລະໃຊ້ຍ່ານຄວາມຖີ່ດຽວກັນຫລືໃກ້ຄຽງກັນ

9.1.6.4 ການໃຊ້ຄື້ນຄວາມຖີ່ ມີຄວາມຄຸ້ມຄ່າ ໂດຍຄວາມກວ້າງແຖບຄື້ນຄວາມຖີ່ (Bandwidth) ຫລືຈໍານວນຄວາມຖີ່ວິທະຍຸຫລືຊ່ອງຄວາມຖີ່ວິທະຍຸ ຕ້ອງສອດຄ່ອງກັບປະລິມານການໃຊ້ງານ

9.2 ວິທີການໃນການພິຈາລະນາຈັດສັນຄື້ນຄວາມຖີ່ ປະກອບດ້ວຍ

9.2.1  ສໍານັກງານ ກສທຊ. ພິຈາລະນາຄໍາຂໍພ້ອມເອກະສານຫລັກຖານ ໂດຍໃຊ້ຫລັກເກນໃນຂໍ້9.1ທຸກຂໍ້ທັງນີ້ສໍານັກງານ ກສທຊ.ອາດເລືອກຄວາມຖີ່ວິທະຍຸອື່ນຫລືຊ່ອງຄວາມຖີ່ວິທະຍຸອື່ນຕາມຕາຕະລາງກໍານົດຄື້ນຄວາມຖີ່ແຫ່ງຊາດຫລືແຜນຄວາມຖີ່ວິທະຍຸຫລືປະກາດ ກສທຊ.ທີ່ກ່ຽວຂ້ອງ ເພື່ອຈັດສັນໃຫ້ແກ່ຜູ້ຂໍຮັບຈັດສັນຄື້ນຄວາມຖີ່ໄດ້ໂດຍຈະຕ້ອງໄດ້ຮັບຄວາມຍິນຍອມຈາກຜູ້ຂໍຮັບຈັດສັນຄື້ນຄວາມຖີ່ກ່ອນດໍາເນີນການໃນສ່ວນທີ່ກ່ຽວຂ້ອງ

9.2.2  ກໍລະນີການຈັດສັນຄື້ນຄວາມຖີ່ ຕາມຕາຕະລາງກໍານົດຄື້ນຄວາມຖີ່ແຫ່ງຊາດ

9.2.2.1 ຫາກຜົນການພິຈາລະນາໃນຂໍ້ 9.2.1ຖືກຕ້ອງຄົບຖ້ວນໃຫ້ສໍານັກງານ ກສທຊ.ສະເຫນີ ກສທຊ.ເປັນຜູ້ພິຈາລະນາອານຸມັດການຈັດສັນຄື້ນຄວາມຖີ່ ກ່ອນເລຂາທິການ ກສທຊ.ເປັນຜູ້ອອກຫລັກຖານການຈັດສັນຄື້ນຄວາມຖີ່ພ້ອມໃບອານຸຍາດວິທະຍຸຄົມມະນາຄົມ (ຖ້າມີ)ໃຫ້ແກ່ຜູ້ຂໍຮັບຈັດສັນຄື້ນຄວາມຖີ່





9.2.2.2  ໃຫ້ສໍານັກງານ ກສທຊ. ດໍາເນີນການຕາມຂໍ້ 9.2.2.1 ໃຫ້ແລ້ວພາຍໃນເກົ້າສິບມື້ ທັງນີ້  ຫາກການດໍາເນີນການມີຄວາມລ່າຊ້າເກີນກວ່າໄລຍະເວລາທີ່ກໍາຫນົດໃຫ້ສໍານັກງານ ກສທຊ.ແຈ້ງຜູ້ຮັບຈັດສັນຄື້ນຄວາມຖີ່ຮູ້ໂດຍໄວພ້ອມເຫດຜົນ ແລະເມື່ອການພິຈາລະນາແລ້ວ ໃຫ້ສໍານັກງາ ກສທຊ.ແຈ້ງຜົນການພິຈາລະນາໃຫ້ຜູ້ຂໍຮັບຈັດສັນຄື້ນຄວາມຖີ່ຮູ້ພາຍໃນເຈັດມື້

9.2.3 ການມີການຈັດສັນຄື້ນຄວາມຖີ່ ຕາມແຜນຄວາມຖີ່ວິທະຍຸຫລືປະກາດ ກສທຊ.ທີ່ກ່ຽວຂ້ອງ

9.2.3.1 ຫາກຜົນການພິຈາລະນາໃນຂໍ້ 9.2.1 ຖືກຕ້ອງຄົບຖ້ວນ ໃຫ້ເລຂາທິການ ກສທຊ.ເປັນຜູ້ພິຈາລະນາອານຸມັດການຈັດສັນຄື້ນຄວາມຖີ່ແລະອອກຫລັກຖານການຈັດສັນຄື້ນຄວາມຖີ່ພ້ອມໃບອານຸຍາດວິທະຍຸຄົມມະນາຄົມ(ຖ້າມີ)ໃຫ້ແກ່ຜູ້ຂໍຮັບຈັດສັນຄື້ນຄວາມຖີ່

9.2.3.2  ໃຫ້ສໍານັກງານ ກສທຊ. ດໍາເນີນການຕາມຂໍ້ 9.2.3.1 ໃຫ້ແລ້ວພາຍໃນສາມສິບມື້ ທັງນີ້  ຫາກການດໍາເນີນການມີຄວາມລ່າຊ້າເກີນກວ່າໄລຍະເວລາທີ່ກໍາຫນົດ ໃຫ້ສໍານັກງານ ກສທຊ. ແຈ້ງຜູ້ຂໍຮັບຈັດສັນຄື້ນຄວາມຖີ່ຮູ້ໂດຍໄວພ້ອມເຫດຜົນ ແລະເມື່ອການພິຈາລະນາແລ້ວ ໃຫ້ສໍານັກງານ ກສທຊ.ແຈ້ງຜົນການພິຈາລະນາໃຫ້ຜູ້ຂໍຮັບຈັດສັນຄື້ນຄວາມຖີ່ຮູ້ພາຍໃນເຈັດມື້

9.2.4 ກໍລະນີການຈັດສັນຄື້ນຄວາມຖີ່ເພື່ອຄວາມຫມັ້ນຄົງຂອງລັດ

9.2.4.1 ຫາກຜົນການພິຈາລະນາໃນຂໍ້ 9.2.1 ຖືກຕ້ອງຄົບຖ້ວນ  ໃຫ້ສໍານັກງານ ກສທຊ. ດໍາເນີນການເພື່ອໃຫ້ເປັນໄປຕາມປະກາດວ່າດ້ວຍແນວທາງການຈັດສັນຄື້ນຄວາມຖີ່ສໍາລັບກິດຈະການວິທະຍຸຄົມມະນາຄົມເພື່ອຄວາມຫມັ້ນຄົງຂອງລັດທີ່ກ່ຽວຂ້ອງ ກ່ອນດໍາເນີນການຂໍອານຸມັດການຈັດສັນຄື້ນຄວາມຖີ່ຕາມຂໍ້ 9.2.2 ຫລື9.2.3ແລ້ວແຕ່ກໍລະນີ

9.2.4.2  ໃຫ້ສໍານັກງານ ກສທຊ. ດໍາເນີນການຕາມຂໍ້ 9.2.4.1 ໃຫ້ແລ້ວພາຍໃນຫນຶ່ງຮ້ອຍຊາວມື້ ທັງນີ້ ຫາກການດໍາເນີນການມີຄວາມລ່າຊ້າເກີນກວ່າໄລຍະເວລາທີ່ກໍາຫນົດ ໃຫ້ສໍານັກງານ ກສທຊ.ແຈ້ງຜູ້ຂໍຮັບຈັດສັນຄື້ນຄວາມຖີ່ຮູ້ໂດຍໄວ ພ້ອມເຫດຜົນ ແລະເມື່ອພິຈາລະນາແລ້ວ ໃຫ້ສໍານັກງານ ກສທຊ.ແຈ້ງຜົນການພິຈາລະນາໃຫ້ຜູ້ຂໍຮັບຈັດສັນຄື້ນຄວາມຖີ່ຮູ້ພາຍໃນເຈັດມື້

9.2.4.3  ໃນກໍລະນີທີ່ຄະນະເຮັດວຽກຫລືຄະນະອານຸກໍາມະການຕາມປະກາດຄະນະກໍາມະການກິດຈະການກະຈາຍສຽງ ກິດຈະການໂທລະທັດ ແລະກິດຈະການໂທລະຄົມມະນາຄົມແຫ່ງຊາດ  ວ່າດ້ວຍແນວທາງການຈັດສັນຄື້ນ

ຄວາມຖີ່ສຳລັບກິດຈະການວິທະຍຸຄົມມະນາຄົມເພື່ອຄວາມຫມັ້ນຄົງຂອງລັດທີ່ກ່ຽວຂ້ອງ ບໍ່ສາມາດປະຕິບັດຫນ້າທີ່ໄດ້ ຊຶ່ງສົ່ງຜົນໃຫ້ການດຳເນີນການບໍ່ສາມາດແລ້ວພາຍໃນກອບເວລາທີ່ກຳຫນົດໄວ້ໃນຂໍ້ 9.2.4.2 ໃຫ້ສຳນັກງານ ກສທຊ. ດຳເນີນການຕາມຂໍ້ 9.2.2 ຫລື 9.2.3ແລ້ວແຕ່ກໍລະນີ

9.2.5 ກໍລະນີການຈັດສັນຄື່ນຄວາມຖີ່ທີ່ຢູ່ພາຍໃຕ້ຂໍ້ຕົກລົງການປະສານແລະຈັດສັນຄື່ນຄວາມຖີ່ຕາມບໍລິເວນຊາຍແດນກັບປະເທດທີ່ມີອານາເຂດຕິດຕໍ່ກັນ



9.2.5.1 ຫາກຜົນການພິຈາລະນາໃນຂໍ້ 9.2.1ຖືກຕ້ອງຄົບຖ້ວນ ໃຫ້ສຳນັກງານ ກສທຊ. ດຳເນີນການຕາມຂໍ້ຕົກລົງການປະສານແລະຈັດສັນຄື່ນຄວາມຖີ່ຕາມບໍລິເວນຊາຍແດນກັບປະເທດທີ່ມີອານາເຂດຕິດຕໍ່ກັນທີ່ກ່ຽວຂ້ອງໃຫ້ແລ້ວ ທັງນີ້ ຫາກເປັນຄື່ນຄວາມຖີ່ເພື່ອຄວາມຫມັ້ນຄົງຂອງລັດ ເມື່ອໄດ້ຮັບຄວາມເຫັນຊອບຕາມຂໍ້ຕົກລົງດັ່ງກ່າວແລ້ວ ໃຫ້ສຳນັກງານ ກສທຊ. ດຳເນີນການຕາມຂໍ້ 9.2.4

9.2.5.2 ໃຫ້ສຳນັກງານ ກສທຊ. ດຳເນີນການຕາມຂໍ້ 9.2.5.1 ໃຫ້ແລ້ວພາຍໃນຫນຶ່ງຮ້ອຍຫ້າສິບມື້ ທັງນີ້ ຫາກການດຳເນີນການມີຄວາມລ່າຊ້າເກີນກວ່າໄລຍະເວລາທີ່ກຳຫນົດ ໃຫ້ສຳນັກງານ ກສທຊ.ແຈ້ງຜູ້ຂໍຮັບຈັດສັນຄື່ນຄວາມຖີ່ຮູ້ໂດຍໄວ ພ້ອມເຫດຜົນ ແລ້ວເມື່ອພິຈາລະນາແລ້ວ ໃຫ້ສຳນັກງານ ກສທຊ.ແຈ້ງຜົນການພິຈາລະນາໃຫ້ຜູ້ຂໍຮັບຈັດສັນຄື່ນຄວາມຖີ່ຮູ້ພາຍໃນເຈັດມື້

9.2.5.3 ຫາກປະເທດທີ່ມີອານາເຂດຕິດຕໍ່ກັນທີ່ກ່ຽວຂ້ອງບໍ່ໃຫ້ຄວາມເຫັນຊອບຕໍ່ການໃຊ້ຄື່ນຄວາມຖີ່ທີ່ຢູ່ພາຍໃຕ້ຂໍ້ຕົກລົງຕາມບໍລິເວນຊາຍແດນ ໃຫ້ສຳນັກງານ ກສທຊ.ແຈ້ງຜົນການພິຈາລະນາໃຫ້ຜູ້ຂໍຮັບຈັດສັນຄື່ນຄວາມຖີ່ຮູ້ພ້ອມເຫດຜົນພາຍໃນເຈັດມື້ ນັບຕັ້ງແຕ່ມື້ທີ່ໄດ້ຮັບຜົນການພິຈາລະນາຈາກປະເທດທີ່ມີອານາເຂດຕິດຕໍ່ກັນທີ່ກ່ຽວຂ້ອງ

9.2.6 ຫາກຜົນການພິຈາລະນາໃນຂໍ້9.2.1 ບໍ່ຖືກຕ້ອງຄົບຖ້ວນ ໃຫ້ສຳນັກງານ ກສທຊ.ແຈ້ງຜົນການພິຈາລະນາໃຫ້ຜູ້ຂໍຮັບຈັດສັນຄື່ນຄວາມຖີ່ຮູ້ ພ້ອມເຫດຜົນ ພາຍໃນເຈັດມື້ ນັບຕັ້ງແຕ່ມື້ທີ່ພິຈາລະນາແລ້ວ

## ຫມວດ 3
## ຂໍ້ກຳຫນົດແລະເງື່ອນໄຂການຈັດສັນຄື່ນຄວາມຖີ່

--------------------------

ຂໍ້ 10 ກຳຫນົດອາຍຸການຈັດສັນຄື່ນຄວາມຖີ່ຄັ້ງລະບໍ່ເກີນຫ້າປີ

ຂໍ້ 11 ໃນກໍລະນີທີ່ການໃຊ້ຄື່ນຄວາມຖີ່ກໍ່ໃຫ້ເກີດການລົບກວນຕໍ່ການໃຊ້ຄື່ນຄວາມຖີ່ຂອງຜູ້ອື່ນທີ່ໄດ້ຮັບການອານຸຍາດຢູ່ກ່ອນແລ້ວ ໃຫ້ຜູ້ໄດ້ຮັບຈັດສັນຄື່ນຄວາມຖີ່ມີຫນ້າທີ່ແຈ້ງໃຫ້ສຳນັກງານ ກສທຊ. ຮູ້ໂດຍໄວ ເພື່ອບົ່ງຊີ້ສາເຫດການລົບກວນທີ່ເກີດຂຶ້ນ ແລະຜູ້ໄດ້ຮັບຈັດສັນຄື່ນຄວາມຖີ່ຈະຕ້ອງໃຫ້ຄວາມຮ່ວມມືແກ້ໄຂບັນຫາການລົບກວນທີ່ເກີດຂຶ້ນ ລວມທັງຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆທີ່ອາດເກີດຂຶ້ນຈາກການແກ້ໄຂບັນຫາການລົບກວນເຊັ່ນວ່ານັ້ນ ທັງນີ້ ຫາກບໍ່ສາມາດແກ້ໄຂການລົບກວນການໃຊ້ຄື່ນຄວາມຖີ່ໄດ້ ພາຍໃນສາມສິບມື້ ນັບຕັ້ງແຕ່ມື້ທີ່ສຳນັກງານ ກສທຊ.ໄດ້ຮັບແຈ້ງ ໃຫ້ຜູ້ໄດ້ຮັບຈັດສັນຄື່ນຄວາມຖີ່ລະງັບການໃຊ້ຄື່ນຄວາມຖີ່ໂດຍທັນທີ ແລະຍື່ນຄຳຂໍເພື່ອຂໍຮັບຈັດສັນຄື່ນຄວາມຖີ່ທົດແທນຄື່ນຄວາມຖີ່ເດີມ

ຂໍ້ 12 ໃນກໍລະນີທີ່ ສຳນັກງານ ກສທຊ.ກວດສອບພົບວ່າ ຜູ້ໄດ້ຮັບຈັດສັນຄື່ນຄວາມຖີ່ບໍ່ມີການໃຊ້ຄື່ນຄວາມຖີ່ເປັນເວລາຕິດຕໍ່ກັນດົນເກີນກວ່າສອງອາທິດ ໃຫ້ສຳນັກງານ ກສທຊ.ມີຫນັງສືແຈ້ງໃຫ້ຜູ້ໄດ້ຮັບຈັດສັນຄື່ນຄວາມຖີ່ຮູ້ ຫາກຜູ້ໄດ້ຮັບຈັດສັນຄື່ນຄວາມຖີ່ບໍ່ມີຫນັງສືຊີ້ແຈງພ້ອມເຫດຜົນອັນຄວນ ພາຍໃນຫົກສິບມື້ ນັບຕັ້ງແຕ່ມື້ທີ່ປາກົດຕາມຫນັງສືຂອງສຳນັກງານ ກສທຊ. ໃຫ້ສຳນັກງານ ກສທຊ.ມີຫນັງສືແຈ້ງໃຫ້ຜູ້ໄດ້ຮັບຈັດສັນຄື່ນຄວາມຖີ່ຮູ້ອີກຄັ້ງຫນຶ່ງ ຫາກຜູ້ໄດ້ຮັບຈັດສັນຄື່ນຄວາມຖີ່ບໍ່ມີຫນັງສືຊີ້ແຈ້ງພ້ອມເຫດຜົນອັນຄວນ

ພາຍໃນຫົກສິບມື້ ນັບຕັ້ງແຕ່ມື້ທີ່ປາກົດຕາມໜັງສືຂອງສຳນັກງານ ກສທຊ. ສະບັບທີ 2 ໃຫ້ສຳນັກງານ ກສທຊ. ສະເໜີໃຫ້ ກສທຊ.ພິຈາລະນາຍົກເລີກການຈັດສັນຄື່ນຄວາມຖີ່ ຕາມຄວນແກ່ກໍລະນີຕໍ່ໄປ

ຂໍ້ 13 ໃນກໍລະນີທີ່ ສຳນັກງານ ກສທຊ. ກວດສອບພົບ ກໍລະນີໃດກໍລະນີໜຶ່ງ ຫລືຫລາຍກໍລະນີຮ່ວມກັນດັ່ງຕໍ່ໄປນີ້

13.1 ການໃຊ້ຄື່ນຄວາມຖີ່ ກໍ່ໃຫ້ເກີດການລົບກວນຄື່ນຄວາມຖີ່ໃນລະດັບຮຸນແຮງຕໍ່ການໃຊ້ຄື່ນຄວາມຖີ່ພາຍໃນປະເທດ ຫລືລະຫວ່າງປະເທດ

13.2 ການໃຊ້ຄື່ນຄວາມຖີ່ ບໍ່ເປັນໄປຕາມຂໍ້ຕົກລົງການປະສານແລະຈັດສັນຄື່ນຄວາມຖີ່ຕາມບໍລິເວນຊາຍແດນ

13.3ໃຫ້ຜູ້ອື່ນໃຊ້ຄື່ນຄວາມຖີ່ບາງສ່ວນຫລືທັງໝົດ ໂດຍບໍ່ໄດ້ຮັບຄວາມເຫັນຊອບຈາກ ກສທຊ.

13.4 ບໍ່ປະຕິບັດຕາມກົດ ລະບຽບ ປະກາດ ຫລັກເກນ ວິທີການ ແລະເງື່ອນໄຂ ຕາມທີ່ ກສທຊ. ກຳໜົດ

ໃຫ້ສຳນັກງານ ກສທຊ. ມີຄຳສັ່ງລະງັບການຈັດສັນຄື່ນຄວາມຖີ່ ແລະພັກໃຊ້ໃບອານຸຍາດວິທະຍຸຄົມມະນາຄົມທີ່ກ່ຽວຂ້ອງເປັນການຊົ່ວຄາວ ແລະມີໜັງສືແຈ້ງໃຫ້ຜູ້ໄດ້ຮັບຈັດສັນຄື່ນຄວາມຖີ່ຮູ້ເພື່ອຍຸຕິການໃຊ້ຄື່ນຄວາມຖີ່ ແລະແກ້ໄຂບັນຫາໂດຍໄວ ໂດຍໃຫ້ຜູ້ໄດ້ຮັບຈັດສັນຄື່ນຄວາມຖີ່ລາຍງານຄວາມຄືບໜ້າໃນການແກ້ໄຂບັນຫາໃຫ້ສຳນັກງານ ກສທຊ. ຮູ້ທຸກໆຫົກສິບມື້ ນັບຕັ້ງແຕ່ມື້ທີ່ປາກົດຕາມໜັງສືແຈ້ງລະງັບການຈັດສັນຄື່ນຄວາມຖີ່ ແລະພັກໃບອານຸຍາດວິທະຍຸຄົມມະນາຄົມທີ່ກ່ຽວຂ້ອງເປັນການຊົ່ວຄາວທັງນີ້ ຫາກບໍ່ສາມາດແກ້ບັນຫາໄດ້ພາຍໃນໜຶ່ງຮ້ອຍມື້ ໃຫ້ສຳນັກງານ ກສທຊ. ສະເໜີໃຫ້ ກສທຊ.ພິຈາລະນາຍົກເລີກການຈັດສັນຄື່ນຄວາມຖີ່ຕາມຄວນແກ່ກໍລະນີຕໍ່ໄປ

## ໝວດ4

## ຄ່າທຳນຽມ

----------------------------------

ຂໍ້ 14 ຄ່າທຳນຽມໃນການພິຈາລະນາຄຳຂໍ 5,000ບາດ ຕໍ່ໜຶ່ງຄຳຂໍ ຊຶ່ງບໍ່ສາມາດເອີ້ນຄືນໄດ້ ທັງນີ້ ບໍ່ແມ່ນບັງຄັບໃນກໍລະນີ ດັ່ງຕໍ່ໄປນີ້

14.1 ກໍລະນີການຈັດສັນຄື່ນຄວາມຖີ່ເປັນການຊົ່ວຄາວ ໂດຍບໍ່ລວມເຖິງ ກໍລະນີການຈັດສັນຄື່ນຄວາມຖີ່ເປັນການຊົ່ວຄາວ ເພື່ອສຶກສາວິໄຈ ທົດລອງຫລືທົດສອບ ຊຶ່ງຕ້ອງດຳເນີນການຕາມປະກາດຄະນະກຳມະການກິດຈະການກະຈາຍສຽງ ກິດຈະການໂທລະທັດ ແລະກິດຈະການໂທລະຄົມມະນາຄົມແຫ່ງຊາດ ເລື່ອງ ຫລັກເກນການອານຸຍາດໃຫ້ໃຊ້ຄື່ນຄວາມຖີ່ເພື່ອການທົດລອງຫລືການທົດສອບເປັນການຊົ່ວຄາວໃນກິດຈະການວິທະຍຸຄົມມະນາຄົມແລະກິດຈະການໂທລະຄົມມະນາຄົມ

14.2 ກໍລະນີການຍົກເລີກການຈັດສັນຄື່ນຄວາມຖີ່

14.3 ກໍລະນີການຈັດສັນຄື່ນຄວາມຖີ່ທົດແທນຄື່ນຄວາມຖີ່ເດີມ

ຂໍ້ 15 ຄ່າທຳນຽມໃນການໃຊ້ຄື່ນຄວາມຖີ່ ໃຫ້ເປັນໄປຕາມ ກສທຊ.ກຳໜົດ

ຂໍ້ 16 ຄ່າທຳນຽມໃບອານຸຍາດວິທະຍຸຄົມມະນາຄົມ ໃຫ້ເປັນໄປຕາມປະກາດຄະນະກຳມະການກິດຈະການກະຈາຍສຽງ ກິດຈະການໂທລະທັດ ແລະກິດຈະການໂທລະຄົມມະນາຄົມແຫ່ງຊາດ ເລື່ອງ ຄ່າທຳນຽມໃບອານຸຍາດວິທະຍຸຄົມມະນາຄົມ

## ໝວດ 5
## ການປ່ຽນແປງຂອບເຂດການອານຸຍາດຂອງຄື່ນຄວາມຖີ່ຈັດສັນໄວ້ເດີມ

----------------------------------------

ຂໍ້ 17 ຜູ້ໄດ້ຮັບຈັດສັນຄື່ນຄວາມຖີ່ ທີ່ມີຄວາມປະສົງຈະປ່ຽນແປງຂອບເຂດການອານຸຍາດຂອງຄື່ນຄວາມຖີ່ທີ່ຈັດສັນໄວ້ເດີມ ຕ້ອງຍື່ນຄຳຂໍ ຕາມລາຍລະອຽດໃນຂໍ້ 7

ຂໍ້ 18 ຫລັກເກນໃນການພິຈາລະນາການປ່ຽນແປງຂອບເຂດການອານຸຍາດຂອງຄື່ນຄວາມຖີ່ທີ່ຈັດສັນໄວ້ເດີມປະກອບດ້ວຍ

18.1 ການຈັດສັນຄື່ນຄວາມຖີ່ ຍັງບໍ່ສິ້ນອາຍຸ ວັນທີ່ສຳນັກງານ ກສທຊ.ໄດ້ຮັບຄຳຂໍ

18.2 ຫລັກເກນຕາມຂໍ້ 9.1

ຂໍ້ 19 ວິທີການໃນການພິຈາລະນາປ່ຽນແປງຂອບເຂດການອານຸຍາດຂອງຄື່ນຄວາມຖີ່ທີ່ຈັດສັນໄວ້ເດີມປະກອບດ້ວຍ

19.1 ສຳນັກງານ ກສທຊ. ພິຈາລະນາຄຳຂໍພ້ອມເອກະສານຫລັກຖານ ໂດຍໃຊ້ຫລັກເກນໃນຂໍ້18 ທຸກຂໍ້

19.2 ກໍລະນີຄື່ນຄວາມຖີ່ ຕາມຕາຕະລາງກຳໜົດຄື່ນຄວາມຖີ່ແຫ່ງຊາດ

19.2.1 ຫາກຜົນການພິຈາລະນາໃນຂໍ້19.1ຖືກຕ້ອງຄົບຖ້ວນ ໃຫ້ສຳນັກງານ ກສທຊ.ສະເຫນີ ກສທຊ.ເປັນຜູ້ພິຈາລະນາອານຸມັດການປ່ຽນແປງຂອບເຂດການອານຸຍາດຂອງຄື່ນຄວາມຖີ່ທີ່ຈັດສັນໄວ້ເດີມ ກ່ອນເລຂາທິການ ກສທຊ.ເປັນຜູ້ຍົກເລີກຫລືອອກໃບອານຸຍາດວິທະຍຸຄົມມະນາຄົມທີ່ກ່ຽວຂ້ອງແລ້ວແຕ່ກໍລະນີ ໃຫ້ແກ່ຜູ້ຂໍ

ທັງນີ້ ໃນກໍລະນີທີ່ມີການຍົກເລີກໃບອານຸຍາດວິທະຍຸຄົມມະນາຄົມ ໃຫ້ດຳເນີນການຕາມປະກາດຄະນະກຳມະການກິດຈະການກະຈາຍສຽງ ກິດຈະການໂທລະທັດ ແລະກິດຈະການໂທລະຄົມມະນາຄົມແຫ່ງຊາດ ເລື່ອງການມີໃຊ້ເຄື່ອງວິທະຍຸຄົມມະນາຄົມແລະຕັ້ງສະຖານນີວິທະຍຸຄົມມະນາຄົມ ໃນສ່ວນທີ່ກ່ຽວຂ້ອງດ້ວຍ

19.2.2 ໃຫ້ສຳນັກງານ ກສທຊ. ດຳເນີນການຕາມຂໍ້ 19.2.1ໃຫ້ແລ້ວພາຍໃນເກົ້າສິບມື້ ທັງນີ້ ຫາກການດຳເນີນການມີຄວາມລ່າຊ້າເກີນກວ່າໄລຍະເວລາທີ່ກຳໜົດ ໃຫ້ສຳນັກງານ ກສທຊ.ແຈ້ງຜູ້ຂໍຮູ້ໂດຍໄວ ພ້ອມເຫດຜົນ ແລະເມື່ອການພິຈາລະນາສຳເລັດ ໃຫ້ສຳນັກງານ ກສທຊ.ແຈ້ງຜົນການພິຈາລະນາໃຫ້ຜູ້ຂໍຮູ້ພາຍໃນ7ມື້

19.3 ກໍລະນີຄື່ນຄວາມຖີ່ ຕາມແຜນຄວາມຖີ່ວິທະຍຸຫລືປະກາດ ກສທຊ.ທີ່ກ່ຽວຂ້ອງ

19.3.1 ຫາກຜົນການພິຈາລະນາໃນຂໍ້ 19.1ຖືກຕ້ອງຄົບຖ້ວນ ໃຫ້ເລຂາທິການ ກສທຊ.ເປັນຜູ້ພິຈາລະນາອານຸມັດການປ່ຽນແປງຂອບເຂດການອານຸຍາດຂອງຄື່ນຄວາມຖີ່ທີ່ຈັດສັນໄວ້ເດີມພ້ອມຍົກເລີກຫລືອອກໃບອານຸຍາດວິທະຍຸຄົມມະນາຄົມທີ່ກ່ຽວຂ້ອງ ແລ້ວແຕ່ກໍລະນີ ໃຫ້ແກ່ຜູ້ຂໍ



ທັງນີ້ ໃນກໍລະນີທີ່ການຍົກເລີກໃບອານຸຍາດຄົມມະນາຄົມ ໃຫ້ດຳເນີນການຕາມປະກາດຄະນະກຳມະການກິດຈະການກະຈາຍສຽງ ກິດຈະການໂທລະທັດ ແລະກິດຈະການໂທລະຄົມມະນາຄົມແຫ່ງຊາດ

19.3.2 ໃຫ້ສຳນັກງານ ກສທຊ.ດຳເນີນການຕາມຂໍ້19.3.1ໃຫ້ແລ້ວພາຍໃນສາມສິບມື້ ທັງນີ້ ຫາກການດຳເນີນການມີຄວາມລ່າຊ້າເກີນກວ່າໄລຍະເວລາທີ່ກຳໜົດ ໃຫ້ສຳນັກງານ ກສທຊ.ແຈ້ງຜູ້ຂໍຮູ້ໂດຍໄວ ພ້ອມເຫດຜົນ ແລະເມື່ອການພິຈາລະນາສຳເລັດ ໃຫ້ສຳນັກງານ ກສທຊ.ແຈ້ງຜົນການພິຈາລະນາໃຫ້ຜູ້ຂໍຮັບຮູ້ພາຍໃນເຈັດມື້

19.4 ກໍລະນີຄື່ນຄວາມຖີ່ເພື່ອຄວາມໝັ້ນຄົງຂອງລັດ

19.4.1 ຫາກຜົນການພິຈາລະນາໃນຂໍ້19.1 ຖືກຕ້ອງຄົບຖ້ວນ ໃຫ້ສຳນັກງານ ກສທຊ. ດຳເນີນການເພື່ອໃຫ້ເປັນໄປຕາມປະກາດຄະນະກຳມະການກິດຈະການກະຈາຍສຽງ ກິດຈະການໂທລະທັດແລະກິດຈະການໂທລະຄົມມະນາຄົມແຫ່ງຊາດ ວ່າດ້ວຍແນວທາງການຈັດສັນຄື່ນຄວາມຖີ່ສຳລັບກິດຈະການວິທະຍຸຄົມມະນາຄົມເພື່ອຄວາມໝັ້ນຄົງຂອງລັດທີ່

ກ່ຽວຂ້ອງ ກ່ອນດຳເນີນການຂໍອານຸມັດປ່ຽນແປງຂອບເຂດການອານຸຍາດຂອງຄື້ນຄວາມຖີ່ທີ່ຈັດສັນໄວ້ເດີມ ຕາມຂໍ້ 19.2 ຫລື19.3ແລ້ວແຕ່ກໍລະນີ

19.4.2 ໃຫ້ສຳນັກງານ ກສທຊ. ດຳເນີນການຕາມຂໍ້ 19.4.1ໃຫ້ແລ້ວພາຍໃນຫນຶ່ງຮ້ອຍຊາວມື້ ທັງນີ້ ຫາກການດຳເນີນການມີຄວາມລ່າຊ້າເກີນກວ່າໄລຍະເວລາທີ່ກຳຫນົດ ໃຫ້ສຳນັກງານ ກສທຊ.ແຈ້ງຜູ້ຂໍຮູ້ໂດຍໄວ ພ້ອມເຫດຜົນ ແລະເມື່ອການພິຈາລະນາສຳເລັດ ໃຫ້ສຳນັກງານ ກສທຊ.ແຈ້ງຜົນການພິຈາລະນາໃຫ້ຜູ້ຂໍຮັບຮູ້ພາຍໃນເຈັດມື້

19.4.3 ໃນກໍລະນີທີ່ຄະນະເຮັດວຽກຫລືຄະນະອານຸກຳມະການຕາມປະກາດຄະນະກຳມະການກິດຈະການກະຈາຍສຽງ ກິດຈະການໂທລະທັດ ແລະກິດຈະການໂທລະຄົມມະນາຄົມແຫ່ງຊາດ ວ່າດ້ວຍແນວທາງການຈັດສັນຄື້ນຄວາມຖີ່ ສຳລັບກິດຈະການວິທະຍຸຄົມມະນາຄົມເພື່ອຄວາມຫມັ້ນຄົງຂອງລັດທີ່ກ່ຽວຂ້ອງ ບໍ່ສາມາດປະຕິບັດຫນ້າທີ່ໄດ້ ຊຶ່ງສົ່ງຜົນໃຫ້ການດຳເນີນການບໍ່ສາມາດແລ້ວພາຍໃນກອບເວລາທີ່ກຳຫນົດໄວ້ໃນຂໍ້19.4.2ໃຫ້ສຳນັກງານ ກສທຊ.ດຳເນີນການຕາມຂໍ້19.2ຫລື19.3ແລ້ວແຕ່ກໍລະນີ

19.5 ກໍລະນີຄື້ນຄວາມຖີ່ທີ່ຢູ່ພາຍໃຕ້ຂໍ້ຕົກລົງການປະສານແລະຈັດສັນຄື້ນຄວາມຖີ່ຕາມບໍລິເວນຊາຍແດນກັບປະເທດທີ່ມີອານາເຂດຕິດຕໍ່ກັນ

19.5.1ຫາກຜົນການພິຈາລະນາໃນຂໍ້ 19.1 ຖືກຕ້ອງຄົບຖ້ວນ ໃຫ້ສຳນັກງານ ກສທຊ. ດຳເນີນການຕາມຂໍ້ຕົກລົງການປະສານແລະຈັດສັນຄື້ນຄວາມຖີ່ຕາມບໍລິເວນຊາຍແດນກັບປະເທດທີ່ມີອານາເຂດຕິດຕໍ່ກັນທີ່ກ່ຽວຂ້ອງໃຫ້ສຳເລັດ ທັງນີ້ ຫາກເປັນຄື້ນຄວາມຖີ່ເພື່ອຄວາມຫມັ້ນຄົງຂອງລັດເມື່ອໄດ້ຮັບຄວາມເຫັນຊອບຕາມຂໍ້ຕົກລົງດັ່ງກ່າວແລ້ວ ໃຫ້ສຳນັກງານ ກສທຊ. ດຳເນີນການຕາມຂໍ້ 19.4

19.5.2 ໃຫ້ສຳນັກງານ ກສທຊ. ດຳເນີນການຕາມຂໍ້19.5.1ໃຫ້ສຳເລັດພາຍໃນຫນຶ່ງຮ້ອຍຫ້າສິບມື້ ທັງນີ້ ຫາກການດຳເນີນການມີຄວາມລ່າຊ້າເກີນກວ່າໄລຍະເວລາທີ່ກຳຫນົດ ໃຫ້ສຳນັກງານ ກສທຊ.ແຈ້ງຜູ້ຂໍຮູ້ໂດຍໄວ ພ້ອມເຫດຜົນ ແລະເມື່ອການພິຈາລະນາສຳເລັດ ໃຫ້ສຳນັກງານ ກສທຊ.ແຈ້ງຜົນການພິຈາລະນາໃຫ້ຜູ້ຂໍຮັບຮູ້ພາຍໃນເຈັດມື້



19.5.3 ຫາກປະເທດທີ່ມີອານາເຂດຕິດຕໍ່ກັນທີ່ກ່ຽວຂ້ອງ ບໍ່ໃຫ້ຄວາມເຫັນຊອບຕໍ່ການໃຊ້ຄື້ນຄວາມຖີ່ທີ່ຢູ່ພາຍໃຕ້ຂໍ້ຕົກລົງການປະສານແລະຈັດສັນຄື້ນຄວາມຖີ່ບໍລິເວນຊາຍແດນ ໃຫ້ສຳນັກງານ ກສທຊ.ແຈ້ງຜົນການພິຈາລະນາໃຫ້ຜູ້ຂໍຮູ້ ພ້ອມເຫດຜົນ ພາຍໃນເຈັດມື້ ນັບຕັ້ງແຕ່ວັນທີ່ໄດ້ຮັບຜົນການພິຈາລະນາຈາກປະເທດທີ່ມີອານາເຂດຕິດຕໍ່ກັນທີ່ກ່ຽວຂ້ອງ

19.6 ຫາກຜົນການພິຈາລະນາໃນຂໍ້ 19.1ບໍ່ຖືກຕ້ອງຄົບຖ້ວນ ໃຫ້ສຳນັກງານ ກສທຊ.ແຈ້ງຜົນການພິຈາລະນາໃຫ້ຜູ້ຂໍຮູ້ ພ້ອມເຫດຜົນ ພາຍໃນເຈັດມື້ ນັບຕັ້ງແຕ່ມື້ທີ່ການພິຈາລະນາສຳເລັດ

## ຫມວດ 6
## ການຕໍ່ອາຍຸການຈັດສັນຄື້ນຄວາມຖີ່

---

ຂໍ້ 20 ສຳນັກງານ ກສທຊ.ຈະແຈ້ງໃຫ້ຜູ້ໄດ້ຮັບຈັດສັນຄື້ນຄວາມຖີ່ດຳເນີນການຕໍ່ອາຍຸການຈັດສັນຄື້ນຄວາມຖີ່ລ່ວງຫນ້າບໍ່ຫນ້ອຍກວ່າຫົກສິບມື້ ກ່ອນມື້ທີ່ຫມົດອາຍຸ ທັງນີ້ ບໍ່ສາມາດນຳມາໃຊ້ເປັນເຫດຫລືເງື່ອນໄຂໃດໆຫາກຜູ້ໄດ້ຮັບຈັດສັນຄື້ນຄວາມຖີ່ບໍ່ສາມາດດຳເນີນການຕໍ່ອາຍຸການຈັດສັນຄື້ນຄວາມຖີ່ໄດ້ຕາມກຳຫນົດ

ຂໍ້21 ຜູ້ໄດ້ຮັບຈັດສັນຄື້ນຄວາມຖີ່ ທີ່ມີຄວາມປະສົງຈະຕໍ່ອາຍຸການຈັດສັນຄື້ນຄວາມຖີ່ຕ້ອງຍື່ນຄຳຂໍ ຕາມລາຍລະອຽດໃນຂໍ້ 7 ທັງນີ້ ຫາກມີເຫດອັນຄວນສົງໄສວ່າເຄື່ອງວິທະຍຸຄົມມະນາຄົມບໍ່ເປັນໄປຕາມມາດຕະຖານທີ່ກ່ຽວຂ້ອງ ສຳນັກງານ ກສທຊ.ຈະສັ່ງໃຫ້ມີການທົດສອບເຄື່ອງວິທະຍຸຄົມມະນາຄົມ ເພື່ອຢືນຢັນວ່າເຄື່ອງວິທະຍຸຄົມມະນາຄົມທີ່ຈະໃຊ້ງານຕໍ່ໄປນັ້ນ ຍັງຄົງມີຄວາມສອດຄ່ອງຕາມປະກາດວ່າດ້ວຍມາດຕະຖານທາງເຕັກນິກແລະການກວດສອບແລະຮັບຮອງມາດຕະຖານທີ່ກ່ຽວຂ້ອງ

ຂໍ້ 22 ຫລັກເກນໃນການພິຈາລະນາຕໍ່ອາຍຸການຈັດສັນຄື້ນຄວາມຖີ່ ປະກອບດ້ວຍ

22.1 ການຈັດສັນຄື້ນຄວາມຖີ່ ຍັງບໍ່ສິ້ນອາຍຸ ທີ່ວັນທີ່ສຳນັກງານ ກສທຊ.ໄດ້ຮັບຄຳຂໍ

22.2 ລັກສະນະທາງເຕັກນິກຂອງເຄື່ອງວິທະຍຸຄົມມະນາຄົມ ຍັງຄືງເຫມືອນເດີມ

22.3 ເອກະສານຜົນການທົດສອບ ໃນກໍລະນີທີ່ສຳນັກງານ ກສທຊ.ສັ່ງໃຫ້ມີການທົດສອບເຄື່ອງວິທະຍຸຄົມມະນາຄົມ

22.4 ຫລກເກນຕາມຂໍ້ 9.1

ຂໍ້ 23 ວິທີການໃນການພິຈາລະນາຕໍ່ອາຍຸການຈັດສັນຄື້ນຄວາມຖີ່ ປະກອບດ້ວຍ

23.1 ສຳນັກງານ ກສທຊ.ພິຈາລະນາຄຳຂໍ ໂດຍໃຊ້ຫລັກເກນໃນຂໍ້ 22 ທຸກຂໍ້ທັງນີ້ໃນລະຫວ່າງ ການດຳເນີນການພິຈາລະນາຕໍ່ອາຍຸການຈັດສັນຄື້ນຄວາມຖີ່ໃຫ້ຜູ້ໄດ້ຮັບຈັດສັນຄື້ນຄວາມຖີ່ສາມາດໃຊ້ຄື້ນຄວາມຖີ່ຕໍ່ໄປຈົນກວ່າຈະໄດ້ຮັບແຈ້ງຜົນການພິຈາລະນາຈາກສຳນັກງານ ກສທຊ.

23.2 ຫາກຜົນການພິຈາລະນາໃນຂໍ້ 23.1 ຖືກຕ້ອງຄົບຖ້ວນ ໃຫ້ເລຂາທິການ ກສທຊ.ເປັນຜູ້ພິຈາລະນາອານຸມັດການຕໍ່ອາຍຸການຈັດສັນຄື້ນຄວາມຖີ່ ແລະອອກຫລັກຖານການຈັດສັນຄື້ນຄວາມຖີ່ພ້ອມໃບອານຸຍາດວິທະຍຸຄົມມະນາຄົມ(ຖ້າມີ)ໃຫ້ແກ່ຜູ້ຂໍ



23.3 ໃຫ້ສຳນັກງານ ກສທຊ.ດຳເນີນການຕາມຂໍ້ 23.2 ໃຫ້ແລ້ວພາຍໃນສິບຫ້າມື້ ທັງນີ້ ຫາກການດຳເນີນການມີຄວາມລ່າຊ້າເກີນກວ່າໄລຍະເວລາທີ່ກຳຫນົດ ໃຫ້ສຳນັກງານ ກສທຊ.ແຈ້ງຜູ້ຂໍຮູ້ໂດຍໄວ ພ້ອມເຫດຜົນ ແລະເມື່ອການພິຈາລະນາສຳເລັດ ໃຫ້ສຳນັກງານ ກສທຊ.ແຈ້ງຜົນການພິຈາລະນາໃຫ້ຜູ້ຂໍຮັບຮູ້ພາຍໃນເຈັດມື້

23.4 ຫາກຜົນການພິຈາລະນາໃນຂໍ້ 23.1 ບໍ່ຖືກຕ້ອງຄົບຖ້ວນ ໃຫ້ສຳນັກງານ ກສທຊ.ແຈ້ງຜົນການພິຈາລະນາໃຫ້ຜູ້ຂໍຮູ້ ພ້ອມເຫດຜົນ ພາຍໃນເຈັດມື້ ນັບຕັ້ງແຕ່ມື້ທີ່ການພິຈາລະນາສຳເລັດ

## ຫມວດ7
## ການຍົກເລີກການຈັດສັນຄື້ນຄວາມຖີ່

-----------------------------------

ຂໍ້24 ການຍົກເລີກການຈັດສັນຄື້ນຄວາມຖີ່ ມີຫລັກເກນແລະວິທີການໃນການພິຈາລະນາດັ່ງນີ້

24.1 ຫລັກເກນໃນການພິຈາລະນາການຍົກເລີກການຈັດສັນຄື້ນຄວາມຖີ່ ປະກອບດ້ວຍຂໍ້ໃດຂໍ້ຫນື່ງດັ່ງຕໍ່ໄປນີ້

24.1.1 ການຈັດສັນຄື້ນຄວາມຖີ່ ສິ້ນສຸດອາຍຸ

24.1.2 ຜູ້ໄດ້ຮັບຈັດສັນຄື້ນຄວາມຖີ່ ປະສົງຈະຍົກເລີກການຈັດສັນຄື້ນຄວາມຖີ່ ໂດຍຍື່ນຄຳຂໍ ຕາມລາຍລະອຽດໃນຂໍ້ 7

24.1.3 ກສທຊ.ມີຄຳສັ່ງໃຫ້ຍົກເລີກການຈັດສັນຄື້ນຄວາມຖີ່ ດ້ວຍສາເຫດຕາມຂໍ້12 ຫລື 13

24.2 ວິທີການໃນການພິຈາລະນາການຍົກເລີກການຈັດສັນຄື້ນຄວາມຖີ່ ປະກອບດ້ວຍ

24.2.1 ກໍລະນີຂໍ້ 24.1.1 ໃຫ້ສຳນັກງານ ກສທຊ.ຍົກເລີກໃບອານຸຍາດວິທະຍຸຄົມມະນາຄົມ(ຖ້າມີ)ແລະດຳເນີນການຕາມປະກາດຄະນະກຳມະການກິດຈະການກະຈາຍສຽງ ກິດຈະການໂທລະທັດ ແລະກິດຈະການໂທລະຄົມມະນາຄົມແຫ່ງຊາດ ເລື່ອງການມີ ໃຊ້ເຄື່ອງວິທະຍຸຄົມມະນາຄົມ ແລະຕັ້ງສະຖານນີວິທະຍຸຄົມມະນາຄົມ ໃນສ່ວນທີ່ກ່ຽວຂ້ອງກ່ອນແຈ້ງໃຫ້ຜູ້ໄດ້ຮັບຈັດສັນຄື້ນຄວາມຖີ່ຮູ້ ພາຍໃນສິບຫ້າມື້ ນັບຕັ້ງແຕ່ວັນທີ່ການຈັດສັນຄື້ນຄວາມຖີ່ສິ້ນສຸດອາຍຸ

24.2.2 ກໍລະນີຂໍ້ 24.1.2 ໃຫ້ສຳນັກງານ ກສທຊ. ຍົກເລີກການຈັດສັນຄື້ນຄວາມຖີ່ພ້ອມໃບອານຸຍາດວິທະຍຸຄົມມະນາຄົມ (ຖ້າມີ)ໃຫ້ແກ່ຜູ້ຂໍ ແລະດຳເນີນການຕາມປະກາດຄະນະກຳມະການກິດຈະການກະຈາຍສຽງ ກິດຈະການໂທລະທັດ ແລະກິດຈະການໂທລະຄົມມະນາຄົມແຫ່ງຊາດ ເລື່ອງ ການມີ ໃຊ້ເຄື່ອງວິທະຍຸຄົມມະນາຄົມແລະຕັ້ງສະຖານນີວິທະຍຸຄົມມະນາຄົມ ໃນສ່ວນທີ່ກ່ຽວຂ້ອງ ໂດຍໃຫ້ດຳເນີນການໃຫ້ສຳເລັດພາຍໃນສິບຫ້າມື້ ນັບຕັ້ງແຕ່ມື້ທີ່ສຳນັກງານ ກສທຊ.ໄດ້ຮັບຄຳຂໍ

24.2.3 ກໍລະນີຂໍ້ 24.1.3ໃຫ້ສຳນັກງານ ກສທຊ. ຍົກເລີກໃບອານຸຍາດວິທະຍຸຄົມມະນາຄົມ(ຖ້າມີ)ແລະດຳເນີນການຕາມປະກາດຄະນະກຳມະການກິດຈະການກະຈາຍສຽງ ກິດຈະການໂທລະທັດ ແລະກິດຈະການໂທລະຄົມມະນາຄົມແຫ່ງຊາດ ເລື່ອງ ການມີ ໃຊ້ເຄື່ອງວິທະຍຸຄົມມະນາຄົມ ແລະຕັ້ງສະຖານີວິທະຍຸຄົມມະນາຄົມ ໃນສ່ວນທີ່ກ່ຽວຂ້ອງກ່ອນແຈ້ງໃຫ້ຜູ້ໄດ້ຮັບຈັດສັນຄື່ນຄວາມຖີ່ຮູ້ພາຍໃນສິບຫ້າມື້ ນັບຕັ້ງແຕ່ມື້ທີ່ ກສທຊ.ມີມະຕິຍົກເລີກການຈັດສັນຄື່ນຄວາມຖີ່



**ບົດສະເພາະການ**

ຂໍ້ 25 ຜູ້ໄດ້ຮັບຈັດສັນຄື່ນຄວາມຖີ່ເພື່ອກິດຈະການວິທະຍຸຄົມມະນາຄົມແລະຜູ້ໄດ້ຮັບອານຸຍາດໃຫ້ໃຊ້ເຄື່ອງວິທະຍຸຄົມມະນາຄົມ ກ່ອນວັນທີ່ປະກາດສະບັບນີ້ມີຜົນໃຊ້ບັງຄັບ ຕ້ອງດຳເນີນການຕາມຂໍ້6ແລະແຈ້ງລາຍລະອຽດກ່ຽວກັບການໃຊ້ຄື່ນຄວາມຖີ່ ພ້ອມເອກະສານຫລັກຖານການອານຸຍາດຕາມທີ່ສຳນັກງານ ກສທຊ.ກຳຫນົດ ພາຍໃນກອບເວລາດັ່ງນີ້

25.1 ພາຍໃນຫົກສິບມື້ ນັບຕັ້ງແຕ່ມື້ທີ່ປະກາດນີ້ມີຜົນໃຊ້ບັງຄັບ ໃນກໍລະນີທີ່ການຈັດສັນຄື່ນຄວາມຖີ່ເພື່ອກິດຈະການວິທະຍຸຄົມມະນາຄົມ ຫລືການອານຸຍາດໃຫ້ໃຊ້ເຄື່ອງວິທະຍຸຄົມມະນາຄົມທີ່ຖືກຕ້ອງດ້ວຍກົດຫມາຍມີການກຳຫນົດມື້ສິ້ນສຸດອາຍຸການອານຸຍາດ

25.2 ພາຍໃນຫນຶ່ງຮ້ອຍແປດສິບມື້ ນັບຈາກມື້ທີ່ປະກາດນີ້ມີຜົນບັງຄັບໃຊ້ ໃນກໍລະນີທີ່ການຈັດສັນຄື່ນຄວາມຖີ່ເພື່ອກິດຈະການວິທະຍຸຄົມມະນາຄົມ ຫລືການອານຸຍາດໃຫ້ໃຊ້ເຄື່ອງວິທະຍຸຄົມມະນາຄົມທີ່ຖືກຕ້ອງດ້ວຍກົດຫມາຍ ບໍ່ໄດ້ກຳຫນົດມື້ສິ້ນສຸດອາຍຸການອານຸຍາດ

ຂໍ້ 26 ຫາກສຳນັກງານ ກສທຊ.ບໍ່ໄດ້ຮັບລາຍລະອຽດກ່ຽວກັບການໃຊ້ຄື່ນຄວາມຖີ່ ພ້ອມເອກະສານຫລັກຖານການອານຸຍາດ ພາຍໃນໄລຍະເວລາທີ່ກຳຫນົດຕາມຂໍ້25ໃຫ້ຖືວ່າ ການຈັດສັນຄື່ນຄວາມຖີ່ເພື່ອກິດຈະການວິທະຍຸຄົມມະນາຄົມຫລືການອານຸຍາດໃຫ້ໃຊ້ເຄື່ອງວິທະຍຸຄົມມະນາຄົມ ສິ້ນສຸດອາຍ

ຂໍ້ 27 ເມື່ອສຳນັກງານ ກສທຊ.ພິຈາລະນາລາຍລະອຽດກ່ຽວກັບການໃຊ້ຄື່ນຄວາມຖີ່ພ້ອມເອກະສານຫລັກຖານການອານຸຍາດແລ້ວເຫັນວ່າຖືກຕ້ອງຄົບຖ້ວນ ລວມທັງ ສອດຄ່ອງກັບແຜນແມ່ບົດການບໍລິຫານຄື່ນຄວາມຖີ່ ຕາຕະລາງກຳຫນົດຄື່ນຄວາມຖີ່ແຫ່ງຊາດ ແຜນແມ່ບົດກິດຈະການກະຈາຍສຽງແລະກິດຈະການໂທລະທັດແຜນແມ່ບົດກິດຈະການໂທລະຄົມມະນາຄົມ ແຜນຄວາມຖີ່ວິທະຍຸ ຫລືປະກາດ ກສທຊ. ທີ່ກ່ຽວຂ້ອງ ໃຫ້ສຳນັກງານ ກສທຊ.ອອກຫລັກຖານການຈັດສັນຄື່ນຄວາມຖີ່ ພ້ອມໃບອານຸຍາດວິທະຍຸຄົມມະນາຄົມ(ຖ້າມີ)ແລະກຳຫນົດອາຍຸການຈັດສັນຄື່ນຄວາມຖີ່ຕາມຂໍ້ 10 ໃຫ້ແກ່ຜູ້ໄດ້ຮັບຈັດສັນຄື່ນຄວາມຖີ່

ຂໍ້ 28 ການອານຸຍາດໃຫ້ໃຊ້ເຄື່ອງວິທະຍຸຄົມມະນາຄົມ ຊຶ່ງບໍ່ໄດ້ກຳຫນົດອາຍຸການອານຸຍາດ ກ່ອນວັນທີປະກາດນີ້ໃຊ້ບັງຄັບ ໃຫ້ຖືວ່າເປັນການຈັດສັນຄື່ນຄວາມຖີ່ ແລະໃຫ້ດຳເນີນການຕາມຂໍ້25ຖືງຂໍ້27

ຂໍ້ 29 ໃນລະຫວ່າງທີ່ ກສທຊ.ຍັງບໍ່ປະກາດກຳຫນົດກ່ຽວກັບຄ່າທຳນຽມໃນການໃຊ້ຄື່ນຄວາມຖີ່ໃຫ້ເອີ້ນເກັບໃນອັດຕາທີ່ບໍ່ຫນ້ອຍກວ່າອັດຕາທີ່ກຳຫນົດໄວ້ໃນປະກາດກະຊວງເຕັກໂນໂລຊີສານສົນເທດແລະການສື່ສານ ເລື່ອງ ກຳຫນົດໃຫ້ຜູ້ໃຊ້ຄວາມຖີ່ວິທະຍຸຕ້ອງເສຍຄ່າຕອບແທນໃນການໃຊ້ຄວາມຖີ່ວິທະຍຸ ລົງວັນທີ10 ມີນາປີ 2004ຈົນກວ່າ ກສທຊ. ຈະປະກາດກຳຫນົດເປັນຢ່າງອື່ນ

ຂໍ້ 30 ປະກາດນີ້ໃຫ້ໃຊ້ບັງຄັບເມື່ອພົ້ນກຳຫນົດຫນຶ່ງຮ້ອຍແປດສິບມື້ ນັບຕັ້ງແຕ່ມື້ທີ່ປະກາດໃນຣາດຊະກິດນຸເບກສາ

**ປະກາດ ວັນທີ 29 ມີນາ ປີ 2017**

**ພົນອາກາດເອກ ທະເຣດ ປຸນສີ**

**ປະທານກຳມະການກິດຈະການກະຈາຍສຽງ**

**ກິດຈະການໂທລະທັດ ແລະກິດຈະການໂທລະຄົມມະນາຄົມ**

## ພາກຜະນວກ
## ເອກະສານຫລັກຖານທີ່ໃຊ້ປະກອບການຂໍຮັບຈັດສັນຄື້ນຄວາມຖີ່

| ກໍລະນີຕ່າງໆ | ເອກະສານຫລັກຖານ |
|---|---|
| ກໍລະນີການຕັ້ງສະຖານນີວິທະຍຸຄົມມະນາຄົມ | 1. ສໍາເນົາເອກະສານຫລັກຖານສະແດງທີ່ຕັ້ງຂອງສະຖານນີວິທະຍຸຄົມມະນາຄົມ<br>2. ຫນັງສືຍິນຍອມໃຫ້ຕັ້ງສະຖານນີວິທະຍຸຄົມມະນາຄົມກໍລະນີບໍ່ໄດ້ເປັນຜູ້ຖືກໍາມະສິດ<br>3. ສໍາເນົາໃບອານຸຍາດໃຫ້ຕັ້ງສະຖານນີວິທະຍຸຄົມມະນາຄົມ ແທນເອກະສານ ຂໍ້ 1 ແລະ 2 ໄດ້ |
| ກໍລະນີການຕັ້ງສະຖານນີວິທະຍຸຄົມມະນາຄົມເທິງເຮືອ | 1. ສໍາເນົາທະບຽນເຮືອ ຈາກກົມເຈົ້າທ່າ<br>2. ສໍາເນົາໃບອານຸຍາດໃຊ້ເຮືອ ຈາກກົມເຈົ້າທ່າ<br>3. ສໍາເນົາຫລັກຖານການຜ່ານພິທີການທາງສຸນລະກາກອນ<br>4. ສໍາເນົາຫລັກຖານການຊື້ຫລືສັ່ງຊື້ |
| ກໍລະນີຕັ້ງສະຖານນີວິທະຍຸຄົມມະນາຄົມບໍລິເວນທ່າເຮືອ ຫລືຝັ່ງ ເພື່ອການຕິດຕໍ່ລະຫວ່າງສະຖານນີວິທະຍຸຄົມມະນາຄົມເທິງເຮືອກັບທ່າເຮືອຫລືຝັ່ງ | 1. ສໍາເນົາເອກະສານຫລັກຖານສະແດງທີ່ຕັ້ງຂອງສະຖານນີວິທະຍຸຄົມມະນາຄົມ<br>2. ຫນັງສືຍິນຍອມໃຫ້ຕັ້ງສະຖານນີວິທະຍຸຄົມມະນາຄົມກໍລະນີບໍ່ໄດ້ເປັນຜູ້ຖືກໍາມະສິດ<br>3. ສໍາເນົາໃບອານຸຍາດໃຫ້ຕັ້ງສະຖານນີວິທະຍຸຄົມມະນາຄົມ ແທນເອກະສານຂໍ້ 1 ແລະ 2 ໄດ້<br>4. ສໍາເນົາໃບອານຸຍາດປະກອບກິດຈະການທ່າເຮືອເດີນທະເລ ຈາກກົມເຈົ້າທ່າ |
| ກໍລະນີການຕັ້ງສະຖານນີວິທະຍຸຄົມມະນາຄົມເທິງອາກາດສະຍານ | 1. ສໍາເນົາທະບຽນອາກາດສະຍານ ຈາກກົມການບິນພົນລະເຮືອນ<br>2. ສໍາເນົາໃບສໍາຄັນສົມຄວນເດີນອາກາດ ຈາກກົມການບິນພົນລະເຮືອນ<br>3. ສໍາເນົາຫລັກຖານການຜ່ານພິທີທາງສຸນລະກາກອນ<br>4. ສໍາເນົາຫລັກຖານການຊື້ຫລືສັ່ງຊື້ |
| ກໍລະນີການຕັ້ງສະຖານນີວິທະຍຸຄົມມະນາຄົມເພື່ອຄວບຄຸມການເດີນອາກາດ | 1. ສໍາເນົາໃບອານຸຍາດຈັດຕັ້ງສະຫນາມບິນ ຈາກກົມການບິນພົນລະເຮືອນ<br>2. ສໍາເນົາໃບອານຸຍາດຈັດຕັ້ງທີ່ຂຶ້ນລົງຊົ່ວຄາວ ຈາກກົມການບິນພົນລະເຮືອນ |
| ກໍລະນີການຕັ້ງຕະຖານນີວິທະຍຸຄົມມະນາຄົມໃນເຂດ ປອດໄພໃນການເດີນອາກາດ ຕາມປະກາດກະຊວງຄົມມະນາຄົມ | 1. ສໍາເນົາເອກະສານຫລັກຖານສະແດງທີ່ຕັ້ງຂອງສະຖານນີວິທະຍຸຄົມມະນາຄົມ<br>2. ຫນັງສືຍິນຍອມໃຫ້ຕັ້ງສະຖານນີວິທະຍຸຄົມມະນາຄົມກໍລະນີບໍ່ໄດ້ເປັນຜູ້ຖືກໍາມະສິດ<br>3. ສໍາເນົາໃບອານຸຍາດໃຫ້ຕັ້ງສະຖານນີ້ວິທະຍຸຄົມມະນາຄົມ ແທນເອກະສານຂໍ້ 1 ແລະ2ໄດ້ |

| **ກໍລະນີຕ່າງໆ** | **ເອກະສານຫລັກຖານ** |
|---|---|
| | 4. ສໍາເນົາໃບອານຸຍາດປຸກສ້າງໃນເຂດປອດໄພໃນການເດີນອາກາດ ຈາກກົມການບິນພົນລະເຮືອນ |
| ກໍລະນີຕັ້ງສະຖານນີວິທະຍຸຄົມມະນາຄົມຂອງກິດຈະການດາວທຽມ | 1. ສໍາເນົາເອກະສານຫລັກຖານສະແດງທີ່ຕັ້ງຂອງສະຖານນີວິທະຍຸຄົມມະນາຄົມ<br>2. ຫນັງສືຍິນຍອມໃຫ້ຕັ້ງສະຖານນີວິທະຍຸຄົມມະນາຄົມກໍລະນີບໍ່ໄດ້ເປັນຜູ້ຖືກໍາມະສິດ |

| | |
|---|---|
| | 3. ສຳເນົາໃບອານຸຍາດໃຫ້ຕັ້ງສະຖານນີວິທະຍຸຄົມມະນາຄົມ ແທນເອກະສານຂໍ້ 1 ແລະ 2 ໄດ້<br>4. ສຳເນົາຫນັງສືໃຊ້ຊ່ອງສັນຍານດາວທຽມ(ໃນກໍລະນີທີ່ກ່ຽວຂ້ອງ) |
| ກໍລະນີການຂໍຮັບການຈັດສັນຄືນຄວາມຖີ່ແບບໃຊ້ຮ່ວມ | 1. ຫນັງສືໃຫ້ຄວາມຍິນຍອມຈາກຜູ້ໄດ້ຮັບຈັດສັນຄືນຄວາມຖີ່ລາຍອື່ນ ທັງໃນກໍລະນີທີ່ໃຊ້ໂຄງຂ່າຍດຽວກັນ ແລະພື້ນທີ່ໃຊ້ງານທັບຊ້ອນກັນ<br>2. ເອກະສານຫລັກຖານອື່ນ ແລ້ວແຕ່ກໍລະນີ |
| ກໍລະນີອື່ນໆ | ໃຫ້ອ້າງອີງຕາມປະກາດ ກສທຊ. ທີ່ກ່ຽວຂ້ອງ |


-----------------------------------

This translated version is prepared with the sole purpose of facilitating the comprehension of foreign participants in the telecommunication rules and regulations and shall not in any event or by any reason be construed or interpreted as having effect in substitution for supplementary to the Thai version thereof. If its translation to other languages is in contrary to Thai version, the latter shall prevail.

Please note that the translation has not been subjected to an official review by the Office of the National Broadcasting and Telecommunications Commission. The Office of NBTC, accordingly, shall not undertake any responsibility for its accuracy, nor be held liable for any loss or damages arising from or in connection with its use.

-----------------------------------